

ພາກປະຊາສັງຄົມໂດຍຫຍໍ້

# ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ສະພາບການຂອງປະເທດ ແລະ ລັດຖະບານ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສປປ ລາວ) ແມ່ນປະເທດທີ່ບໍ່ມີຊາຍແດນຕິດຈອດກັບທະເລ ເຊິ່ງຕັ້ງຢູ່ເຂດພາກພື້ນອາຊີຕາເວັນອອກສ່ຽງໃຕ້, ມີຊາຍແດນຕິດກັບປະເທດກໍາປູເຈຍ, ສາທາລະນະລັດ ປະຊາຊົນ ຈີນ, ສະຫະພາບມ່ຽນມ້າ, ລາດຊະອາ ນາຈັກໄທ ແລະ ສ.ສ ຫວຽດນາມ. ນະຄອນຫຼວງວຽງຈັນແມ່ນຕົວເມືອງໃຫຍ່ທີ່ມີປະຊາກອນ ປະມານ 600,000 ຄົນ ແລະ ຕັ້ງຢູ່ແຄມແມ່ນໍ້າຂອງ.

ສປປ ລາວ ມີປະຊາກອນປະມານ 6,7 ລ້ານຄົນ,  ປະກອບມີ 49 ກຸ່ມຊົນເຜົ່າ ທີ່ຢູ່ພາຍໃຕ້ສີ່ກຸ່ມຊົນເຜົ່າໃຫຍ່ ທີ່ແຍກຕາມພາສາປາກເວົ້າ:  ລາວລຸ່ມ(ກວມ 67% ຂອງປະຊາກອນ),  ມອນ-ຂະແມ(21%), ມົ້ງ-ລູມຽນ (8%), ແລະ ຈີນ-ທິເບດ (3%). a. ສປປ ລາວ ມີເນື້ອທີ່ທັງໝົດ 236,800 ກິໂລຕາແມັດ, ເຊິ່ງເປັນເຂດພູຜາລຽບຕາມຊາຍແດນເບື້ອງຕາເວັນອອກ ແລະ ທາງພາກເໜືອຂອງປະເທດ. ລະດັບຄວາມທຸກຍາກໄດ້ຫຼຸດລົງຢ່າງໄວວາໃນຊຸມປີທີ່ຜ່ານມາ: ໃນປີ 2008, ຄາດວ່າ 27% (ຈາກ 46% ໃນປີ 1992) ຂອງປະຊາກອນມີລາຍໄດ້ນ້ອຍກວ່າ $1 ຕໍ່ມື້; b. ຜູ້ທຸກຍາກຈໍານວນຫຼວງຫຼາຍແມ່ນຢູ່ເໜືອກວ່າເສັ້ນຄວາມທຸກຍາກພຽງໜ້ອຍດຽວເທົ່ານັ້ນ ສະນັ້ນ ຈຶ່ງມີຄວາມອ່ອນໄຫວ ແລະ ບອບບາງຫຼາຍ. ປະຊາຊົນທີ່ທຸກຍາກສ່ວນໃຫຍ່ແມ່ນເຕົ້າໂຮມຢູ່ເຂດພູສູງ, ແລະ  ປະຊາກອນສ່ວນຫຼາຍຍັງຍຶດຖືເອົາອາຊີບການກະສິກໍາ ທີ່ຍັງມີຄວາມຈໍາກັດໃນການເຂົ້າເຖິງຕະຫຼາດຢູ່.

ສປປ ລາວ ແມ່ນເປັນປະເທດສາທາລະນະລັດ ທີ່ມີລະບົບສະພາດຽວທີ່ຄວບຄຸມໂດຍພັກປະຊາຊົນປະຕິວັດລາວ.  ລະບົບກົດໝາຍແມ່ນຜົນຂອງການປະສົມປະສານກັນ ລະຫວ່າງ ລະບົບສັງຄົມນິຍົມ, ລະບົບກົດໝາຍຂອງຝຣັ່ງ ແລະ ທໍານຽມປະຕິບັດດ້ານກົດໝາຍດັ້ງເດີມ. ລະດັບການຂະຫຍາຍຕົວດ້ານເສດຖະກິດທີ່ສູງໃນປະຈຸບັນແມ່ນມາຈາກຂະແໜງຊັບພະຍາກອນທໍາມະຊາດ, ເຊິ່ງລວມມີການສົ່ງອອກຜົນຂອງຜະລິດດ້ານກະສິກໍາ, ພະລັງງານໄຟຟ້ານໍ້າຕົກ, ແລະ ການຂຸດຄົ້ນບໍ່ແຮ່; ແນວໃດກໍ່ຕາມ, ພົນລະເມືອງລາວສ່ວນໃຫຍ່ແມ່ນຊາວກະສິກອນທີ່ເຮັດການຜະລິດພໍກຸ້ມຢູ່ກຸ້ມກິນ.

[a] E. King ແລະ D. van der Walle. 2010. ຄວາມຫຼາກຫຼາຍດ້ານພາສາຊົນເຜົ່າ ແລະ ຂໍ້ເສຍປຽບ. ພາກທີ 7 ປະຊາຊົນດັ້ງເດີມ, ຄວາມທຸກຍາກ ແລະ ການພັດທະນາ. ເອກະສານການປຶກສາຫາລືຂອງທະນາຄານໂລກ. Washington, D.C. (ມີໃຫ້ທາງອອນລາຍທີ່ http://go.worldbank.org/IILHOIG110)

[b] ອົງການສະຫະປະຊາຊາດເພື່ອການພັດທະນາ ປະຈໍາ ສປປ ລາວ, 2009. ບົດລາຍງານຄວາມຄືບໜ້າ ກ່ຽວກັບ MDG. ນະຄອນຫຼວງວຽງຈັນ. (ມີໃຫ້ທາງອອນລາຍທີ່ www.undplao.org/mdgs/mdgs1.php)

## ພາກປະຊາສັງຄົມ: ສັງລວມໂດຍຫຍໍ້

ພາກປະຊາສັງຄົມໃນປະເທດສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສປປ ລາວ) ໄລຍະຊຸມປີທີ່ຕົກເປັນຫົວເມືອງຂຶ້ນຂອງຝຣັ່ງ ຈົນມາຮອດໄລຍະທີ່ໄດ້ຮັບເອກະລາດ ໃນຊຸມປີ 1953 ແມ່ນບໍ່ໄດ້ຖືກບັນທຶກໄວ້ເປັນເອກະ ສານຢ່າງຈະແຈ້ງ. ຕັ້ງແຕ່ການສ້າງຕັ້ງປະເທດ ສປປ ລາວ ຫາ ປີ 1986, ມີພຽງແຕ່ສາມອົງການຈັດຕັ້ງສາກົນບໍ່ສັງກັດລັດຖະບານ (INGOs) ເທົ່ານັ້ນທີ່ໄດ້ຮັບອະນຸຍາດໃຫ້ດໍາເນີນງານໃນ ສປປ ລາວ ນັ້ນຄື: ອົງການ American Friends Service Committee, ອົງການ Mennonite Central Committee, ແລະ ອົງການ ຊ່ວຍເຫຼືອເດັກອັງກິດ (Save the Children UK).[1] ບັນດາອົງການຈັດຕັ້ງເຫຼົ່ານີ້ໃຫ້ການບໍລິການດ້ານການຊ່ວຍເຫຼືອດ້ານມະນຸດສະທໍາ ແລະ ການພັດທະນາໃນເຂດພື້ນທີ່ທາງພູມີສາດທີ່ຖືກຈໍາກັດ, ແລະ ດໍາເນີນງານພາຍໃຕ້ຂໍ້ຈໍາກັດທາງດ້ານການບໍລິຫານ, ເຊິ່ງລວມທັງການວ່າຈ້າງພະນັກງານທ້ອງຖິ່ນ.  ຫຼັງຈາກການນໍາໃຊ້ກົນໄກເສດຖະກິດທັນປ່ຽນໃໝ່ ໃນປີ 1986, ຫຼາຍໆ INGOs ຄ່ອຍໆໄດ້ຮັບອະນຸຍາດໃຫ້ດໍາເນີນງານໃນ ສປປ ລາວຫຼາຍຂຶ້ນ, ເຊິ່ງສ່ວນໃຫຍ່ເຮັດວຽກໃນຂະແໜງການພັດທະນາ ແລະ ການໃຫ້ການບໍລິການຊຸມຊົນ.

ໃນຂະນະທີ່ສິດທິໃນການສ້າງຕັ້ງເປັນສະມາຄົມໄດ້ປະກົດມີຕັ້ງແຕ່ການປະກາດໃຊ້ລັດຖະທໍາມະນູນໃນປີ 1991 (ມາດຕາ 44), ມີພຽງແຕ່ສອງສາມອົງການຈັດຕັ້ງທ້ອງຖິ່ນທີ່ເປັນເອກະລາດເທົ່ານັ້ນທີ່ມີການດໍາເນີນງານ ຈົນມາຮອດການປ່ຽນແປງທາງກົດໝາຍໃນປີ 2009 (ເບິ່ງການຮ່ວມມື ລະຫວ່າງ ADB–ພາກປະຊາສັງຄົມ). ກຸ່ມອົງການເຫຼົ່ານີ້ໂດຍທົ່ວໄປແລ້ວເຄື່ອນໄຫວພາຍໃຕ້ການກຽມການຊົ່ວຄາວ, ລວມທັງການຈົດທະບຽນເປັນບໍລິສັດ ຫຼື ສະຖາບັນຝຶກອົບຮົມ, ຫຼື ຜ່ານການກຽມການກັບກະຊວງສະເພາະໃດໜຶ່ງ. ຫຼາຍໆ ພາລະໜ້າທີ່ດ້ານການພັດທະນາທີ່ຄວນຈະເປັນໜ້າວຽກພາກປະຊາສັງຄົມ (CSOs) ໃນສະພາບການອື່ນ ແມ່ນຖືກທໍາໜ້າທີ່ໂດຍອົງການຈັດຕັ້ງມະຫາຊົນ, ເຊັ່ນວ່າ ແນວລາວສ້າງຊາດ, ໜ່ວຍງານກໍ່ສ້າງຮາກຖານການເມືອງ ທີ່ຖືກສ້າງຕັ້ງຂຶ້ນໃນປີ 1979. ໜ້າວຽກຂອງອົງການຈັດຕັ້ງມະຫາຊົນປະກອບມີການປຸກລະດົມຂົນຂວາຍສັງຄົມ ແລະ ຂະຫຍາຍວຽກງານຂອງພັກ ແລະ ລັດຖະບານ ໃນທົ່ວສັງຄົມລາວ ແລະ ທຸກກຸ່ມຊົນເຜົ່າ. ນອກນັ້ນ ຍັງມີໜ້າທີ່ກໍາກັບຄວບຄຸມ ແລະ ປະສານງານກັບບັນດາອົງການຈັດຕັ້ງມະຫາຊົນອື່ນໆ.

ບົດບາດຂອງພາກປະຊາສັງຄົມ ໃນການພັດທະນາຂອງ ສປປ ລາວ, ໃນຂະນະທີ່ໄດ້ຮັບການສະໜັບສະໜູນຢູ່ໃນລະດັບນະໂຍບາຍກວ້າງໆ, ຍັງພວມຖືກກໍານົດ, ແລະ ກົນໄກການປະສານງານ ແລະ ການຈັດຕັ້ງປະຕິບັດຍັງຢູ່ໃນໄລຍະເລີ່ມຕົ້ນຂອງການວິວັດພັດທະນາ.[2] CSOs ທີ່ດໍາເນີນງານໃນ ສປປ ລາວ ໂດຍທົ່ວໄປແລ້ວເຮັດວຽກເພື່ອປະຕິບັດຕາມ, ໂດຍບໍ່ຄັດຄ້ານ, ນະໂຍບາຍຂອງລັດຖະບານ, ເຖິງແມ່ນວ່າ ໃນຊຸມປີທີ່ຜ່ານມາ, ບາງກຸ່ມອົງການສະໜັບສະໜູນສາກົນໄດ້ເລີ່ມຕິດຕາມກວດກາການພັດທະນາໃນ ສປປ ລາວ ຈາກນອກປະເທດ.

ໃນປະຈຸບັນມີປະມານ 160 INGOs ທີ່ດໍາເນີນງານໃນ ສປປ ລາວ; ປະມານ 66 ອົງການໃນຈໍານວນເຫຼົ່ານີ້ແມ່ນສະມາຊິກຂອງເຄືອຂ່າຍ INGO. INGOs ທີ່ມີສໍານັກງານໃນ ສປປ ລາວ, ເກືອບວ່າບໍ່ມີການຍົກເວັ້ນ, ແມ່ນເນັ້ນໜັກໃສ່ການຈັດຕັ້ງປະຕິບັດບັນດາແຜນງານການພັດທະນາໃນຂະແໜງການຕ່າງໆ, ເຊັ່ນວ່າ ກະສິກໍາ

Asian Development Bank

ແລະ ການພັດທະນາຊົນນະບົດ, ການສຶກສາ, ສິ່ງແວດລ້ອມ, ການເກັບກູ້ລະເບີດທີ່ຕົກຄ້າງຈາກສົງຄາມ, ບົດບາດຍິງຊາຍ, ສຸຂະພາບ, ແລະ ການຄຸ້ມຄອງຊັບພະຍາກອນທຳມະຊາດ. ນອກນັ້ນ INGOs, ໃນຊຸມປີບໍ່ດົນມານີ້, ຍັງໄດ້ເລີ່ມຕົ້ນດຳເນີນງານເພື່ອສ້າງບົດບາດຕໍ່ກັບນະໂຍບາຍດ້ານການພັດທະນາ, ໂດຍສະເພາະຜ່ານການເຈລະຈາໂຕະມົນປະຈຳປີ ກັບບັນດາຄູ່ຮ່ວມງານດ້ານການພັດທະນາ. ໃນຊຸມປີທີ່ຜ່ານມາ, INGOs ໄດ້ນຳສະເໜີຄຳຄິດເຫັນຕ່າງໆ ກ່ຽວກັບບັນຫາເລື່ອງດິນ ແລະ ການຄຸ້ມຄອງຊັບພະຍາກອນທຳມະຊາດ, ໂດຍສະແຫວງຫາການສະໜັບ ສະໜູນຈາກຜູ້ໃຫ້ທຶນ ແລະ ລັດຖະບານເພື່ອໃຫ້ມີຄວາມເອົາໃຈໃສ່ຫຼາຍຂຶ້ນຕໍ່ກັບບັນຫາເຫຼົ່ານີ້. ບາງ INGOs, ທີ່ມີສຳນັກງານຢູ່ຕ່າງປະເທດ, ເຂົ້າຮ່ວມໃນການສົ່ງເສີມສະໜັບສະໜູນທີ່ມີລັກສະນະໂດຍກົງກວ່າ, ແຕ່ມີຄວາມແຕກຕ່າງຢ່າງຈະແຈ້ງ ລະຫວ່າງ ອົງການຈັດຕັ້ງເຫຼົ່ານີ້ ແລະ INGOs ທີ່ດຳເນີນງານໃນ ສປປ ລາວ.

CSOs ລາວທີ່ເປັນເອກະລາດ ແມ່ນຍັງຢູ່ໄລຍະເລີ່ມຕົ້ນຂອງການວິວັດພັດທະນາ, ແຕ່ກໍ່ກຳລັງນັບມື້ນັບເຕີບໃຫຍ່ຂະຫຍາຍຕົວຂຶ້ນ. ກ່ອນເດືອນເມສາ ປີ 2009, ອົງການ CSOs ທ້ອງຖິ່ນ (ຮັບຮູ້ກັນພາຍໃນທ້ອງຖິ່ນວ່າເປັນສະມາຄົມ ຫຼື ອົງການບໍ່ຫວັງຜົນກຳໄລ [ຫຼື ຂຽນຫຍໍ້ NPAs]) ໄດ້ຈົດທະບຽນຜ່ານຫຼາກຫຼາຍວິທີທີ່ມີຢູ່, ເຊິ່ງໂດຍປົກກະຕິແລ້ວ ຜ່ານຄວາມສຳພັນສ່ວນບຸກຄົນທີ່ມີຕໍ່ກັບໜ່ວຍງານທີ່ກ່ຽວຂ້ອງ ຫຼື ພະແນກການຂອງລັດຖະບານ. ສະມາຄົມເຫຼົ່ານີ້ປະກອບມີສະມາຄົມດ້ານການຄ້າ ແລະ ວິຊາຊີບ ເຊັ່ນວ່າ ສະມາຄົມຜູ້ຂັບຂີ່ລົດຕຸກໆແຂວງຫຼວງພະບາງ, ກຸ່ມຜູ້ປູກ ແລະ ຜູ້ຜະລິດ, ສະມາຄົມຜູ້ນຳໃຊ້ນ້ຳ ແລະ ອົງການຈັດຕັ້ງຂັ້ນຊຸມຊົນ (CBOs) ອື່ນໆ, ມູນນິທິການກຸສົນ, ແລະ ສະມາຄົມດ້ານການພັດທະນາອີກຈຳນວນໜຶ່ງ.

ໃນເດືອນເມສາ 2009, ນາຍົກລັດຖະມົນຕີໄດ້ລົງນາມໃນດຳລັດວ່າດ້ວຍສະມາຄົມ, ເຊິ່ງອະນຸຍາດໃຫ້ມີການຈົດທະບຽນຢູ່ຂັ້ນສູນກາງຂອງບັນດາສະມາຄົມທ້ອງຖິ່ນເປັນຄັ້ງທຳອິດ. ດຳລັດດັ່ງກ່າວເຊິ່ງມີຜົນນຳໃຊ້ໃນເດືອນພະຈິກ ປີ 2009 ກຳນົດໃຫ້ບັນດາອົງການຈັດຕັ້ງທີ່ໄດ້ຈົດທະບຽນຜ່ານຊ່ອງທາງອື່ນ ໃຫ້ຈົດທະບຽນພາຍໃຕ້ລະບົບໃໝ່. ອີງໃສ່ຜົນການສຶກສາປີ 2009, ມີພຽງແຕ່ປະມານ 20 ອົງການ NPAs ທີ່ສາມາດບໍລິຫານຄຸ້ມຄອງທຶນຊ່ວຍເຫຼືອຂະໜາດນ້ອຍໄດ້.[3] ມາຮອດທ້າຍປີ 2010, ຈຳນວນອົງການຈັດຕັ້ງທີ່ຮ້ອງຂໍຈົດທະບຽນພາຍໃຕ້ດຳລັດໃໝ່ໄດ້ເພີ່ມເປັນ 80 ອົງການ,[4] ເຊິ່ງຊີ້ໃຫ້ເຫັນວ່າພົນລະເມືອງລາວຈຳນວນຫຼວງຫຼາຍໄດ້ມີຄວາມສົນໃຈໃນການເຂົ້າຮ່ວມໃນອົງການ CSOs, ແຕ່ກຳລັງລໍຖ້າໃຫ້ມີການປ່ຽນແປງທາງດ້ານສະພາບການເມືອງ ແລະ ກົດໝາຍ. ແນວໃດກໍ່ຕາມ, ຄືກັນກັບໃນຫຼາຍປະເທດອື່ນໃນເຂດພາກພື້ນ, ອົງການພາກປະຊາສັງຄົມຂອງລາວ ຍັງຮັກສາການເຊື່ອມໂຍງຢ່າງໃກ້ຊິດກັບລັດຖະບານ ແລະ ເນັ້ນໜັກໃສ່ຄວາມສຳພັນສ່ວນບຸກຄົນ.

ອົງການຈັດຕັ້ງມະຫາຊົນຂອງລາວ-ອົງການຈັດຕັ້ງສາຍພັກຂອງລັດຖະບານ-ສືບຕໍ່ປະຕິບັດຫຼາຍໆບົດບາດ ຂອງພາກປະຊາສັງຄົມ. ດັ່ງໃນປະເທດເພື່ອນບ້ານ, ມີການໂຕ້ຖຽງກັນ ກ່ຽວກັບວ່າອົງການຈັດຕັ້ງມະຫາຊົນສາ ມາດຖືວ່າເປັນອົງການພາກປະຊາສັງຄົມໄດ້ຫຼືບໍ່, ເພາະວ່າ ຄວາມຮັບຜິດຊອບຕົ້ນຕໍຂອງເຂົາເຈົ້າແມ່ນຕໍ່ກັບລັດ, ບໍ່ແມ່ນຕໍ່ກັບສະມາຊິກຂອງເຂົາເຈົ້າ. ແນວໃດກໍ່ຕາມ, ບາງອົງການຈັດຕັ້ງມະຫາຊົນ ສະແດງບົດບາດຢ່າງຈິງຈັງໃນວຽກງານການພັດທະນາຢູ່ລະດັບທ້ອງຖິ່ນ ແລະ ສູນກາງ, ເຊິ່ງລວມທັງຜ່ານການສະໜອງການຝຶກອົບຮົມ ແລະ ການເສີມສ້າງຄວາມອາດສາມາດ, ການຈັດຕັ້ງກິດຈະກຳທີ່ອີງໃສ່ຊຸມຊົນ, ແລະ ການເຮັດໜ້າທີ່ເປັນຜູ້ອຳ ນວຍຄວາມສະດວກສຳລັບບັນດາຄູ່ຮ່ວມງານດ້ານການພັດທະນາໃນເຂດຊົນນະບົດ. ໃນ ສປປ ລາວ, ອົງການຈັດຕັ້ງມະຫາຊົນມີລັກສະນະເດັ່ນໂດຍການມີເຄືອຂ່າຍສາຍຕັ້ງທີ່ເຂັ້ມແຂງ, ເຊິ່ງເກືອບທັງໝົດລ້ວນແຕ່ມີຕົວແທນໃນແຕ່ລະບ້ານທີ່ເຊື່ອມໂຍງກັບຂັ້ນເມືອງ, ແຂວງ, ແລະ ສູນກາງ. ອົງການຕໍ່ໄປນີ້ແມ່ນອົງການຈັດຕັ້ງມະຫາຊົນຕົ້ນຕໍ:

**ແນວລາວສ້າງຊາດ (LFNC)** ຮັບຜິດຊອບສ້າງຄວາມສາມັກຄີພາຍໃນຊາດ ແລະ ຮັບປະກັນວ່າສິດປະໂຫຍດຂອງກຸ່ມຊົນເຜົ່າສ່ວນນ້ອຍໄດ້ຖືກຮັບຮູ້. ອົງການດັ່ງກ່າວມີສະມາຊິກໃນທົ່ວລະບົບການເມືອງຈາກຂັ້ນສູງກາງເຖິງຂັ້ນບ້ານ. FNC ຍັງຮັບຜິດຊອບປະສານງານກັບບັນດາອົງການຈັດຕັ້ງມະຫາຊົນ ແລະ ກຸ່ມສັງຄົມການເມືອງອື່ນ ແລະ ຮັບຜິດຊອບວຽກງານສາສະໜາ. ເຖິງແມ່ນວ່າມັນມີຄວາມສາມາດຈຳກັດໃນການຈັດຕັ້ງປະຕິບັດໂຄງການ, ແຕ່ມັນກໍ່ໄດ້ດຳເນີນການຄົ້ນຄວ້າ ແລະ ເຮັດໜ້າວຽກການປະສານງານ ແລະ ການພົວພັນໃນນາມຕາງໜ້າໃຫ້ລັດຖະບານ ແລະ ຜູ້ໃຫ້ທຶນ.

**ສະຫະພັນແມ່ຍິງລາວ (LWU)**, ໂດຍສ້າງຕັ້ງຂຶ້ນໃນປີ 1995, ມີສະມາຊິກຫຼາຍກວ່າ 800,000 ຄົນ ໂດຍມີການເຊື່ອມໂຍງຢ່າງເຂັ້ມແຂງຢູ່ຂັ້ນຮາກຫຍ້າ. ສະຫະພັນແມ່ຍິງໄດ້ເຂົ້າຮ່ວມໃນວຽກງານພັດທະນາເສດຖະກິດສັງຄົມ ໃນລະດັບຊຸມຊົນຢູ່ຫຼາຍໆເຂດຂອງ ສປປ ລາວ, ໂດຍໂຄງການສ່ວນໃຫຍ່ແມ່ນແນໃສ່ການຫຼຸດຜ່ອນຄວາມທຸກຍາກ ແລະ ເພີ່ມທະວີຄວາມຮູ້ ແລະ ທັກສະຂອງແມ່ຍິງ ຜ່ານການຝຶກອົບຮົມດ້ານວິຊາຊີບ ແລະ ການພັດທະນາທຸລະກິດຂະໜາດນ້ອຍ. LWU ເຄື່ອນໄຫວຢ່າງຈິງຈັງໃນຖານະເປັນຜູ້ຈັດຕັ້ງປະຕິບັດຂອງບັນດາໂຄງການທີ່ໄດ້ຮັບທຶນຈາກຜູ້ໃຫ້ທຶນ ແລະ ມີບາງປະສົບການໃນເລື່ອງວິທີການເຮັດວຽກແບບມີສ່ວນຮ່ວມ, ເຖິງແມ່ນວ່າລະດັບຄວາມສາມາດ ແລະ ປະສົບການແມ່ນຂຶ້ນກັບຕົວບຸກຄົນໃນແຕ່ລະແຫ່ງກໍ່ຕາມ. ນອກນັ້ນ LWU ຍັງຄຸ້ມຄອງບໍລິຫານສູນຄົ້ນຄວ້ານະໂຍບາຍດ້ານການພັດທະນາ, ສູນຂໍ້ມູນຂ່າວສານບົດບາດຍິງຊາຍ ແລະ ການພັດທະນາ ຢູ່ວຽງຈັນ, ເຊິ່ງໄດ້ດຳເນີນວຽກງານຄົ້ນຄວ້າວິໄຈ ກ່ຽວກັບ ບັນຫາຕ່າງໆ ເຊັ່ນວ່າ ຄວາມຮຸນແຮງຕໍ່ກັບແມ່ຍິງ ແລະ ການຈັດງົບປະມານດ້ານບົດບາດຍິງຊາຍໃນນາມຕາງໜ້າຜູ້ໃຫ້ທຶນ.

**ສະຫະພັນກຳມະບານລາວ (LFTU)** ຖືກສ້າງຕັ້ງຂຶ້ນໃນປີ 1996 ແລະ ແມ່ນອົງການຈັດຕັ້ງຂອງກຳມະກອນໜຶ່ງດຽວໃນປະເທດ. ມັນຮັກສາສະຖານະເປັນຄືກະຊວງໜຶ່ງໂດຍມີການສະໜັບສະໜູນດ້ານງົບປະມານຈາກລັດຖະ ບານ (ພະນັກງານ ແລະ ກິດຈະກຳ). ໃນຂະນະທີ່ຄວາມຮັບຜິດຊອບຕົ້ນຕໍແມ່ນເປັນຕົວແທນໃຫ້ສິດທິຂອງຜູ້ອອກແຮງງານ, LFTU ຍັງໃຫ້ບູລິມະສິດແກ່ວຽກງານການສຶກສາອົບຮົບກຳມະກອນ, ເຊິ່ງລວມທັງການຕອບສະໜອງຕໍ່ກັບການຫັນປ່ຽນເປັນເສດຖະກິດຕະຫຼາດ. LFTU ໄດ້ເຂົ້າຮ່ວມໃນການເຜີຍແຜ່ເອກະສານກ່ຽວກັບການປ້ອງກັນ HIV/AIDS ໃນສະຖານທີ່ເຮັດວຽກ.

**ສູນກາງຊາວໜຸ່ມປະຕິວັດລາວ (LYU)** ເອົາແບບຢ່າງຈາກ LWU. YU ເຂົ້າຮ່ວມໃນບາງກິດຈະກຳການຝຶກອົບຮົມວິຊາຊີບ ແລະ ການພັດທະນາ. ມັນບໍລິຫານຄຸ້ມຄອງສູນຊາວໜຸ່ມ ແລະ ເຮັດການຕະຫຼາດດ້ານເຄື່ອງຫັດຖະກຳ, ເຊັ່ນວ່າ ກອງປະຊຸມສຳມະນາ ກ່ຽວກັບ ເຄື່ອງຫັດຖະກຳແຜ່ນແພຂອງຊາວໜຸ່ມຢູ່ແຂວງຫຼວງພະບາງ. ນອກນັ້ນ ມັນຍັງເຂົ້າຮ່ວມໃນບັນດາໂຄງການລິເລີ່ມຂອງສະມາຄົມປະຊາຊາດອາຊີຕາເວັນອອກສ່ຽງໃຕ້ ຫຼື ອາຊຽນ.

## ຄວາມສຳພັນ ລະຫວ່າງ ລັດຖະບານ–ພາກປະຊາສັງຄົມ

ສາຍສຳພັນທາງການຂອງພາກປະຊາສັງຄົມກັບລັດຖະບານບໍ່ໄດ້ຖືກກຳໜົດຢ່າງຈະແຈ້ງ. ຕົວຢ່າງ, CSOs ບໍ່ໄດ້ມີຕົວແທນຢ່າງເປັນທາງການໃນບັນດາກົນໄກການຮ່ວມງານທາງການຂອງຜູ້ໃຫ້ທຶນ, ຂະບວນການໂຕະມົນ (RTP), ຫຼື ໃນຄະນະເຮັດວຽກຕາມຂະແໜງການທີ່ກ່ຽວຂ້ອງກັບ RTP. INGOs ໄດ້ມີຄວາມສຳເລັດຢ່າງໃຫຍ່ຫຼວງໃນການເຮັດວຽກຜ່ານບັນດາຜູ້ໃຫ້ທຶນໃນບັນດາເວທີເຫຼົ່ານີ້, ແຕ່ NPAs ແມ່ນຍັງບໍ່ມີ

ບົດບາດໃດໆໃນການປະສານງານດ້ານການພັດທະນາທາງການ. ສ່ວນໜຶ່ງຂອງບັນຫາໃນເລື່ອງການກຳນົດບົດບາດ ສຳລັບ ອົງການພາກປະຊາສັງຄົມແມ່ນເປັນຍ້ອນຄວາມຫຍຸ້ງຍາກໃນການຈຳແຍກບົດບາດຂອງ NPAs ອອກຈາກອົງການຈັດຕັ້ງມະຫາຊົນ. ນອກນັ້ນ ມັນຍັງສະທ້ອນໃຫ້ເຫັນຄວາມກັງວົນທີ່ວ່າ NGOs ອາດຈະຕຳນິວິຈານລັດຖະບານ ໂດຍສະເພາະໃນສະພາບແວດລ້ອມບ່ອນທີ່ລັດຖະບານບໍ່ພ້ອມທີ່ຈະຮັບເອົາສິ່ງນີ້. ນອກນັ້ນ ຍັງຂາດຄວາມເຂົ້າໃຈ ກ່ຽວກັບ ວ່າຍ້ອນຫຍັງລັດ ຖະບານ, ໂດຍສະເພາະໃນລະດັບທ້ອງຖິ່ນ, ຈິ່ງເຫັນ NGOs ເປັນຄູ່ແຂ່ງ ສຳລັບ ການໄດ້ຮັບທຶນທີ່ມີຈຳກັດຈາກຜູ້ໃຫ້ທຶນ. ຮູບພາບການເຄື່ອນໄຫວຂອງບົດບາດທີ່ເປັນໄປໄດ້ຂອງອົງການພາກປະຊາສັງຄົມໃນຂະບວນການພັດທະນາທີ່ກ່າວໄວ້ໃນດຳລັດວ່າດ້ວຍສະມາຄົມບໍ່ເປັນຄຳຕອບຢ່າງຄົບຖ້ວນຕໍ່ກັບຄວາມບໍ່ແນ່ນອນເຫຼົ່ານີ້, ແລະ ສະນັ້ນ ແນວຄວາມຄິດຂອງພາກປະຊາສັງຄົມ ຈິ່ງຍັງມີຄວາມຈຳເປັນຕ້ອງໄດ້ເຮັດໃຫ້ເໝາະສົມກັບສະພາບສັງຄົມພາຍໃນລັດ ຖະບານ ແລະ ຊຸມຊົນ.

ຄວາມບໍ່ແນ່ນອນ ກ່ຽວກັບ ພາກປະຊາສັງຄົມນີ້ຍັງມີຜົນສະທ້ອນຕໍ່ກັບຄວາມສາມາດຂອງ CSOs ໃນການລະດົມບັນດາໂຄງການ. ເພາະວ່າກິດຈະກຳຂອງ CSO ຈະໄດ້ຮັບການຍິນດີຫຼືຖືກຮັບເອົາ ກໍ່ຕໍ່ເມື່ອມັນຫາກສອດ ຄ່ອງກັບນະໂຍບາຍຂອງລັດຖະບານ ແລະ ຢູ່ພາຍໃຕ້ການຄວບຄຸມ ຫຼື ການກຳກັບດູແລຂອງໜ່ວຍງານລັດຖະບານເທົ່ານັ້ນ,[5] INGOs ເກີດຄວາມສັບສົນ ກ່ຽວກັບ ບົດບາດ ແລະ ສິດອຳນາດຂອງເຂົາເຈົ້າຢູ່ພາຍໃນລະບົບຂອງລາວ. ຕົວຢ່າງ, ຫຼາຍໆ INGOs ມີຄວາມສຳພັນທາງດ້ານວິຊາການທີ່ເຂັ້ມແຂງກັບບັນດາຂະແໜງການທີ່ກ່ຽວຂ້ອງ ແລະ ອຳນາດການປົກຄອງຂັ້ນແຂວງ ແລະ ເມືອງ, ແຕ່ກໍ່ຍັງມີຄວາມບໍ່ໄວ້ວາງໃຈໃນລະດັບໃດໜຶ່ງຢູ່ພາຍໃນລັດຖະບານ. INGOs ໃນບາງກໍລະນີ ຖືກປະຕິບັດຕໍ່ດັ່ງເປັນຜູ້ໃຫ້ທຶນ, ທີ່ນຳເອົາການໃຫ້ທຶນມາມອບໃຫ້, ແຕ່ໃນບາງຄັ້ງ ກໍ່ຖືວ່າເປັນອົງການພາກປະຊາສັງຄົມ, ແລະ ຕ້ອງມີການຄວບຄຸມກິດຈະກຳຂອງເຂົາເຈົ້າຢ່າງເຄັ່ງຄັດ. ຜົນກະທົບຂອງສິ່ງນີ້, ອີງໃສ່ບາງ INGOs, ມີຢູ່ວ່າ ການອະນຸມັດໂຄງການ ແລະ ການຕັດສິນບັນຫາສາມາດໃຊ້ເວລາດົນນານ ແລະ ໜ່ວຍງານລັດຖະບານທີ່ກ່ຽວຂ້ອງ ບໍ່ແນ່ໃຈວ່າຈະຈັດປະເພດການຊ່ວຍເຫຼືອຂອງ INGO ແນວໃດ.

ເຖິງຈະມີຄວາມຫຍຸ້ງຍາກເຫຼົ່ານີ້ກໍ່ຕາມ, ມີຫຼາຍໆຕົວຢ່າງທີ່ສະແດງໃຫ້ເຫັນການຮ່ວມມືທີ່ປະສົບຜົນສຳເລັດ ລະ ຫວ່າງ ລັດຖະບານ ແລະ ພາກປະຊາສັງຄົມໃນບັນດາໂຄງການຂອງ ADB ໃນ ສປປ ລາວ (ເບິ່ງ *ການຮ່ວມມື ລະ ຫວ່າງ ADB-ພາກປະຊາສັງຄົມ*), ເຊິ່ງເກືອບທັງໝົດແມ່ນຜ່ານແຜນງານເຂດອະນຸພາກພື້ນແມ່ນ້ຳຂອງ (GMS). ມັນອາດຈະເປັນຍ້ອນວ່າລັກສະນະຂອງແຜນງານ GMS ໃນເຂດພາກພື້ນ ໄດ້ສະໜອງສະພາບແວດລ້ອມທີ່ດີສຳລັບ ການສົ່ງເສີມໃຫ້ປະສົບການກັບ CSOs ກາຍເປັນວິທີການໃໝ່ໃນການເຮັດວຽກກັບລັດຖະບານ ສປປ ລາວ.

ໃນບາງຂະແໜງການ, ມີການສະໜັບສະໜູນຢ່າງເຂັ້ມແຂງ ສຳລັບ ບັນດາອົງການ CSOs ທີ່ອີງໃສ່ການມີສ່ວນຮ່ວມຂອງຊຸມຊົນ, ເຊັ່ນວ່າ ຄະນະກຳມະການພັດທະນາການສຶກສາຂັ້ນບ້ານ. ບັນດາອົງການ CBOs ເຫຼົ່ານີ້ແມ່ນນະໂຍບາຍຂອງກະຊວງສຶກສາ, ແລະ ບົດບາດຂອງເຂົາເຈົ້າຄາດວ່າຈະແມ່ນການສົ່ງເສີມການເປັນພົນລະເມືອງທີ່ດີ ແລະ ການມີສ່ວນຮ່ວມຢ່າງຈິງຈັງໃນການເພີ່ມຄຸນນະພາບຂອງການສຶກສາ ແລະ ການສະນັບສະໜູນຊຸມຊົນໃນວຽກງານການສຶກສາອົບຮົມເດັກນ້ອຍ.

## ຂອບກົດໝາຍ ສຳລັບ ພາກປະຊາສັງຄົມ

ມີສອງດຳລັດຕົ້ນຕໍຂອງນາຍົກລັດຖະມົນຕີທີ່ຄວບຄຸມກິດຈະກຳຂອງພາກປະຊາສັງຄົມໃນ ສປປ ລາວ, ເຊິ່ງທັງສອງດຳລັດນີ້ລ້ວນແຕ່ຖືກປະກາດໃຊ້ເມື່ອບໍ່ດົນມານີ້. ດຳລັດວ່າດ້ວຍສະມາຄົມ (ດຳລັດເລກທີ 115) ແມ່ນສິ່ງໃໝ່ ແລະ ແມ່ນສັນຍານບົ່ງບອກເຖິງການປ່ຽນແປງດ້ານນະໂຍບາຍຈາກລັດຖະບານວ່າພາກປະຊາສັງຄົມທ້ອງຖິ່ນໄດ້ມີບ່ອນຢືນໃນຂະບວນການພັດທະນາ, ໃນຂະນະທີ່ດຳລັດວ່າດ້ວຍ INGO (ດຳລັດເລກທີ 13) ແມ່ນການແກ້ໄຂປັບປຸງດຳລັດເກົ່າ. ທັງສອງດຳລັດສາມາດດາວໂຫຼດໄດ້ຈາກຄັງເອກະສານຂອງ LaoFAB (www.laofab.org/).

ນາຍົກລັດຖະມົນຕີໄດ້ລົງນາມໃນ **ດຳລັດ 115** ທີ່ຄາດຫວັງກັນມາຍາວນານໃນເດືອນເມສາ ປີ 2009. ການຈົດທະບຽນໄດ້ເລີ່ມຕົ້ນໃນເດືອນພະຈິກປີ 2009; ແນວໃດກໍ່ຕາມ, ພາຍໃນຕົ້ນປີ 2011, ບໍ່ມີອົງການຈັດຕັ້ງໃດເຮັດສຳເລັດຂະບວນການ ແລະ ໄດ້ຮັບການຈົດທະບຽນຖາວອນ. ການຊັກຊ້ານີ້ສະແດງໃຫ້ເຫັນຄວາມດົນນານ ແລະ ຄວາມສັບສົນຂອງຂະບວນການຈົດທະບຽນ, ເຊິ່ງປະກອບມີການສ້າງຕັ້ງຫຼາຍໆຄະນະກຳມະການ ແລະ ຫຼາຍໆຂັ້ນຕອນໃນການຈົດທະບຽນນຳທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ (PACSA) ແລະ ໜ່ວຍງານທີ່ກ່ຽວຂ້ອງ ຫຼື ດ້ານວິຊາການທີ່ເໝາະສົມຢູ່ຂັ້ນສູນກາງ ແລະ ຫ້ອງວ່າການປົກຄອງແຂວງ ແລະ ບັນດາໜ່ວຍງານຂັ້ນແຂວງ ຫຼື ຂັ້ນເມືອງທີ່ກ່ຽວຂ້ອງ ຖ້າ NPA ຕ້ອງການດຳເນີນງານໃນແຂວງ ຫຼື ເມືອງໃດໜຶ່ງຕາມລຳດັບ.

PACSA ໄດ້ຊີ້ໃຫ້ເຫັນວ່າ ຫຼາຍໆສ່ວນຂອງນິຕິກຳທີ່ກ່ຽວຂ້ອງກັບແບບຟອມຂອງການດຳເນີນງານຂອງສະມາຄົມ, ເຊິ່ງປະກອບມີມູນນິທິ (ອົງການຈັດຕັ້ງທີ່ບໍ່ມີການເປັນສະມາຊິກ) ແລະ ສະຫະກອນ, ຈະຖືກພັດທະນາຂຶ້ນໃນອີກຫຼາຍປີຕໍ່ໄປ. ບາງບັນຫາເລື່ອງພາສີ ແລະ ການເງິນເຊິ່ງລວມມີສະຖານະດ້ານພາສີ, ທີ່ໄດ້ຮັບການໃຫ້ທຶນຈາກຜູ້ໃຫ້ທຶນ, ແລະວິທີທີ່ອົງການພາກປະຊາສັງຄົມຈະເຂົ້າຮ່ວມຢ່າງເປັນທາງການກວ່າໃນຂະບວນການວາງແຜນຂອງລັດຖະບານ, ແມ່ນຍັງບໍ່ທັນໄດ້ຮັບການແກ້ໄຂໃນຂອບກົດໝາຍ ສຳລັບ ອົງການຈັດຕັ້ງຂັ້ນທ້ອງຖິ່ນ.

**ດຳລັດເລກທີ 13** ໄດ້ຮັບການອະນຸມັດໃນຕົ້ນປີ 2010 ແລະ ທົດແທນດຳລັດວ່າດ້ວຍ INGO ເລກທີ 71 (1998) ສະບັບກ່ອນ, ເຊິ່ງຖືວ່າບໍ່ມີລາຍລະອຽດພຽງພໍໃນການໃຫ້ຂອບຄ່າຍຢ່າງພຽງພໍ ສຳລັບ ການຈົດທະບຽນແລະ ການດຳເນີນງານຂອງ INGO ໃນ ສປປ ລາວ. ກົມການຈັດຕັ້ງສາກົນຂອງກະຊວງການຕ່າງປະເທດ ເປັນຜູ້ຄຸ້ມຄອງບໍລິຫານດຳລັດດັ່ງກ່າວ ແລະ ສ້າງຕັ້ງກອງເລຂາຄະນະກຳມະການ ກ່ຽວກັບ ການຄຸ້ມຄອງ ແລະ ການປະສານງານວຽກງານ INGOs, ເຊິ່ງຖືກສ້າງຕັ້ງຂຶ້ນໂດຍມາດຕາທີ 20 ຂອງດຳລັດໃໝ່ນີ້.

ດຳລັດເລກທີ 13 ວາງຂໍ້ກຳນົດຕ່າງໆ ສຳລັບ INGOs (ທີ່ຖືກກຳນົດເປັນອົງການຈັດຕັ້ງທີ່ເຮັດວຽກ ສຳລັບ ການຊ່ວຍເຫຼືອດ້ານການພັດທະນາ ຫຼື ການຊ່ວຍເຫຼືອດ້ານມະນຸດສະທຳ ໂດຍບໍ່ຫວັງຜົນກຳໄລ) ເພື່ອດຳເນີນງານໃນ ສປປ ລາວ. ສິ່ງນີ້ປະກອບມີການຮ້ອງຂໍເອົາໃບອະນຸຍາດດຳເນີນງານ, ການອະນຸມັດສ້າງຕັ້ງສຳນັກງານ, ການອະນຸມັດໂຄງການ, ການອະນຸມັດວ່າຈ້າງພະນັກງານ ແລະ ການອະນຸມັດດຳເນີນກິດຈະກຳຕ່າງໆທີ່ບໍ່ເຊື່ອມໂຍງກັບໂຄງການໃດໜຶ່ງ. ໃບອະນຸຍາດດຳເນີນງານແມ່ນຂໍ້ກຳນົດທຳອິດ ສຳລັບ INGO ທີ່ຕ້ອງການສ້າງຕັ້ງການດຳເນີນງານໃນ ສປປ ລາວ.

ເມື່ອໄດ້ຮັບໃບອະນຸຍາດດຳເນີນງານແລ້ວ, INGO ກໍ່ຈະສາມາດສ້າງບົດສະເໜີໂຄງການ ແລະ ບົດບັນທຶກຄວາມເຂົ້າໃຈກັບບັນດາຄູ່ຮ່ວມງານທີ່ເໝາະສົມຂອງລັດຖະບານ. ປະສົບການພາຍໃຕ້ດຳລັດສະບັບກ່ອນມີຢູ່ວ່າ ຂະບວນ ການນີ້ຂ້ອນຂ້າງໃຊ້ເວລາດົນນານ, ບາງຄັ້ງໃຊ້ເວລາເປັນປີ, ເຊິ່ງກໍ່ຄວາມຫຍຸ້ງຍາກໃນເລື່ອງກຳນົດເວລາຂອງຜູ້ໃຫ້ທຶນ ສຳລັບ ການເບີກຈ່າຍເງິນທຶນ. ແນວໃດກໍ່ຕາມ ດຳລັດສະບັບໃໝ່ໃຫ້ຂະບວນການທີ່ວ່ອງໄວທັນສະໄໝກວ່າໜ້ອຍໜຶ່ງ ເຖິງແມ່ນວ່າມັນບໍ່ຈະແຈ້ງເທື່ອວ່ານີ້ຈະນຳໄປສູ່ການຊັກຊ້ານ້ອຍລົງຫຼືບໍ່. INGOs ຖືກກຳໜົດໃຫ້ລາຍງານເປັນແຕ່ລະປີຕໍ່ກັບຄູ່ຮ່ວມງານຝ່າຍລັດຖະບານຂອງເຂົາເຈົ້າ ແລະ, ເມື່ອສຳເລັດໂຄງການຂອງເຂົາເຈົ້າ, ຕໍ່ກັບພະແນກອົງການຈັດຕັ້ງສາກົນ.

# ເຄືອຂ່າຍ ແລະ ໜ່ວຍງານປະສານງານ

**ເຄືອຂ່າຍ INGO** ຖືກສ້າງຕັ້ງຂຶ້ນໃນເດືອນມັງກອນ ປີ 2005, ໂດຍໄດ້ຮັບການສະໜັບສະໜູນເບື້ອງຕົ້ນຈາກແຜນງານທຶນຊ່ວຍເຫຼືອລ້າຂະໜາດນ້ອຍຂອງທະນາຄານໂລກ. ພາຍໃນເດືອນມິຖຸນາ ປີ 2005, ຄະນະກຳມະການເຄືອຂ່າຍ INGO ທຳອິດໄດ້ຖືກສ້າງຕັ້ງຂຶ້ນ, ໂດຍມີຜູ້ຕາງໜ້າຈາກເຈັດອົງການ INGOs ທີ່ດຳເນີນງານຢູ່ໃນ ສປປ ລາວ. ໃນປະຈຸບັນເຄືອຂ່າຍ INGO ໄດ້ຮັບທຶນທັງໝົດຈາກຄ່າທຳນຽມການເປັນສະມາຊິກ. ເຄືອຂ່າຍ INGO ມີສະມາຊິກທັງໝົດ 66 ອົງການ ແລະ ບໍລິຫານຄຸ້ມຄອງເວັບໄຊບັນຊີລາຍຊື່ຂອງສະມາຊິກ INGO ທາງອອນລາຍ ແລະ ໂຄງການທັງໝົດຂອງເຂົາເຈົ້າ. ເຄືອຂ່າຍ INGO ສົ່ງເສີມຜົນປະໂຫຍດ, ປະສານງານ, ແລະ ໃຫ້ການບໍລິການແກ່ບັນດາສະມາຊິກຂອງຕົນເພື່ອເສີມທະວີການປະກອບສ່ວນຂອງເຂົາເຈົ້າເຂົ້າໃນການພັດທະນາ ສປປ ລາວ.

ເຄືອຂ່າຍ INGO ໃຫ້ການສະໜັບສະໜູນຄະນະ ເຮັດວຽກຕາມຂະແໜງການທີ່ສະໜັບສະໜູນການຈັດຕັ້ງປະຕິບັດພາລະກິດ ແລະ ການສະໜັບສະໜູນຂອງເຄືອຂ່າຍ INGO ຕໍ່ກັບບັນດາສະມາຊິກຜ່ານການແລກປ່ຽນການຄົ້ນຄວ້າວິໄຈ, ບົດຮຽນທີ່ຖອດຖອນໄດ້ ແລະ ວິທີປະຕິບັດວຽກທີ່ດີທີ່ສຸດ; ການກຳໜົດ ແລະ ການເຮັດວຽກຮູບແບບດຽວກັນ; ແລະການປະສານງານຕາມຂະແໜງການ. ໃນປີ 2010, ມີຄະນະເຮັດວຽກໃນບັນດາຂະແໜງການຕໍ່ໄປນີ້: ພາກປະຊາສັງຄົມ ແລະ ການປົກຄອງ, ການສຶກສາ, ສຸຂະພາບ, ຊັບພະຍາກອນມະນຸດ, ບັນຫາເລື່ອງດິນ, ສຸຂະພາບຈິດ, ແລະ ລະເບີດບໍ່ທັນແຕກ (UXO). ເວັບໄຊຂອງເຄືອຂ່າຍ INGO ປະກອບມີລາຍຊື່ໃນປະຈຸບັນຂອງຄະນະເຮັດວຽກຕາມຂະແໜງການ ແລະບຸກຄົນຕິດຕໍ່ຂອງເຂົາເຈົ້າ.

ຜູ້ປະສານງານ ແລະ ເຈົ້າໜ້າທີ່ຕິດຕໍ່ພົວພັນ
ຕູ້ ປນ 11344
ວຽງຈັນ, ສປປ ລາວ
ໂທ +856 21 413290 / 413291 ຕໍ່ສາຍ 221
ມືຖື +856 20 5559 9006 ingonetwork.info@directoryofngos.org

**ເຄືອຂ່າຍສະມາຄົມບໍ່ຫວັງຜົນກຳໄລປະເທດລາວ (LNN)** ແມ່ນເຄືອຂ່າຍບໍ່ເປັນທາງການຂອງບັນດາສະມາຄົມ /ອົງການບໍ່ຫວັງຜົນກຳໄລ (NPAs) ທີ່ມີສ່ວນກ່ຽວຂ້ອງໃນວຽກງານພັດທະນາໃນ ສປປ ລາວ, ເຊິ່ງໄດ້ຈົດທະບຽນຢ່າງຖືກກົດໝາຍ ພາຍໃຕ້ຫຼາຍໆໜ່ວຍງານຂອງລັດຖະບານ, ເຊັ່ນວ່າ ແນວລາວສ້າງຊາດ (LFNC), ແລະ ສະຫະພັນສະມາຄົມວິທະຍາສາດ ແລະ ວິສະວະກອນແຫ່ງປະເທດລາວ (LUSEA). ເຄືອຂ່າຍ LNN ໄດ້ຖືກສ້າງຕັ້ງຂຶ້ນໃນຕົ້ນເດືອນມີນາ 2009, ໂດຍມີຈຸດປະສົງແລກປ່ຽນຂໍ້ມູນ ແລະ ສົ່ງເສີມການເຮັດວຽກທີ່ມີປະສິດທິຜົນ ແລະ ປະສິດທິພາບ.

ໃນປະຈຸບັນນີ້, LNN ແມ່ນເຄືອຂ່າຍບໍ່ເປັນທາງການ, ບໍ່ກ່ຽວຂ້ອງກັບການເມືອງຂອງບັນດາອົງການຈັດຕັ້ງລາວ ທີ່ມີເປົ້າໝາຍຕົ້ນຕໍ ເພື່ອເສີມທະວີການປະສານງານ, ການຮ່ວມມື ແລະ ຄວາມສາມັກຄີເຊິ່ງກັນແລະກັນ; ການແລກປ່ຽນຂໍ້ມູນ ແລະ ການຊ່ວຍເຫຼືອກັນ ລະຫວ່າງ ສະມາຊິກໃນເຄືອຂ່າຍ; ແລະ ການເສີມສ້າງຄວາມອາດສາມາດຮ່ວມກັນຂອງບັນດາສະມາຊິກ. ເຄືອຂ່າຍຍັງຊອກຄູ່ຮ່ວມງານເພື່ອຈັດຕັ້ງປະຕິບັດ ແລະ ໃຫ້ທຶນບັນດາໂຄງການສະເພາະຂອງເຄືອຂ່າຍເພື່ອປະກອບສ່ວນເຂົ້າໃນການລົບລ້າງຄວາມທຸກຍາກໃນ ສປປ ລາວ. ອົງການບໍລິການດ້ານການພັດທະນາຂອງເຢຍລະມັນ (DED) ແລະ ອົງການ Concern Worldwide ໄດ້ໃຫ້ການສະໜັບສະໜູນການພັດທະນາຄວາມອາດສາມາດ ສຳລັບ ສະມາຊິກຂອງເຄືອຂ່າຍ ແລະ ໄດ້ສະໜອງສະຖານທີ່ຫ້ອງການໃຫ້ເຄືອຂ່າຍ. ເຄືອຂ່າຍ LNN ຄຸ້ມຄອງບໍລິຫານເວັບໄຊ ແລະ ມີຫ້ອງການຢູ່ວຽງຈັນ:

ເຄືອຂ່າຍສະມາຄົມບໍ່ຫວັງຜົນກຳໄລປະເທດລາວ (LNN)
08/2 ບ້ານທາຍໂສກ, ເມືອງຈັນທະບູລີ
ຕູ້ ປນ 4374
ວຽງຈັນ, ສປປ ລາວ
ໂທ +856 21 213578 / 219436 ຕໍ່ສາຍ 114
ແຟັກ +856 21 213577
ມືຖື +856 20 5562 0793 www.lao-npa-network.org/eng/

**ກຸ່ມພັດທະນາບົດບາດຍິງຊາຍ (GDG)** ແມ່ນເຄືອຂ່າຍອົງການຈັດຕັ້ງທ້ອງຖິ່ນທີ່ມີຊື່ສຽງທີ່ເຮັດວຽກ ກ່ຽວກັບ ບັນຫາບົດບາດຍິງຊາຍ. ທາງກຸ່ມໄດ້ດຳເນີນງານມາແຕ່ປີ 1991 (ເຊິ່ງຮັບຮູ້ກັນດີໃນຊື່ ແມ່ຍິງໃນການພັດທະນາ) ພາຍໃຕ້ຄັນຮົ່ມຂອງຫຼາຍໆອົງການຈັດຕັ້ງທີ່ເປັນເຈົ້າພາບ. ໃນຂະນະທີ່ບົດບາດຕົ້ນຕໍຂອງກຸ່ມ ຍັງແມ່ນການສ້າງເຄືອຂ່າຍ ແລະ ຄວາມອາດສາມາດຂອງພະນັກງານພາຍໃນອົງການ ບໍ່ສັງກັດລັດໃນດ້ານບົດບາດຍິງຊາຍ, ທາງກຸ່ມຍັງໃຫ້ການບໍລິການທີ່ປຶກສາ ແລະ ການຝຶກອົບຮົມແກ່ບັນດາອົງການຈັດຕັ້ງອື່ນ, ລວມທັງໜ່ວຍງານລັດຖະບານ.

ກຸ່ມພັດທະນາບົດບາດຍິງຊາຍ (GDG) ບ້ານທາຍໂສກ ເຮືອນເລກທີ 071/01
ຕູ້ ປນ 10820
ວຽງຈັນ, ສປປ ລາວ
ໂທ/ແຟັກ +856 21 263349 gdglaos@laopdr.com
www.gdglaos.org/

# ຫຼັກການ, ສິດອຳນາດ ແລະ ມາດຕະຖານຂອງອົງການບໍ່ສັງກັດລັດ (NGO)

ອົງການ CSO ລາວຍັງບໍ່ທັນພັດທະນາມາດຕະຖານ ຫຼື ກົນໄກການປົກຄອງຕົນເອງ. ຂໍ້ກຳນົດດ້ານການຈົດທະ ບຽນ ສຳລັບ INGOs ແລະ NPAs ກວມເອົາບາງມາດຕະຖານຕ່ຳສຸດ ສຳລັບ ການດຳເນີນງານ, ເຖິງແມ່ນວ່າສິ່ງເຫຼົ່ານີ້ອາດຈະເໝາະສົມ ສຳລັບ ການຄວບຄຸມກິດຈະກຳຂອງອົງການ CSO ຫຼາຍກວ່າການສົ່ງເສີມການປົກຄອງທີ່ດີຂອງອົງການພາກປະຊາສັງຄົມ. ສຳລັບ NPAs, ສິ່ງນີ້ລວມມີສະພາທີ່ປະຊຸມກັນຢ່າງນ້ອຍໜຶ່ງຄັ້ງຕໍ່ປີ, ພະນັກງານ, ບົດລາຍງານເປັນປົກກະຕິ ແລະ ແຜນວຽກ. INGOs ຖືກກຳນົດໃຫ້ໄດ້ຮັບໃບອະນຸຍາດ ສຳລັບການດຳເນີນງານ, ເຊິ່ງລວມທັງການວ່າຈ້າງພະນັກງານ, ການເປີດສຳນັກງານ, ແລະ ການເປີດໂຄງການ.

# ການໃຫ້ທຶນຂອງອົງການພາກປະຊາສັງຄົມ

ສປປ ລາວ ຍັງສືບຕໍ່ອາໄສຢ່າງໃຫຍ່ຫຼວງໃສ່ການຊ່ວຍເຫຼືອຈາກພາຍນອກເພື່ອໃຫ້ທຶນແຜນງານການລົງທຶນຂອງລັດ, ເຊິ່ງການຊ່ວຍເຫຼືອການພັດທະນາທາງການ (ODA) ກວມເອົາປະມານ 85%–90% ຂອງທຶນທັງໝົດໃນຂະແໜງການພາກລັດ ໃນສົກປີ 2006–2008. ອີງໃສ່ບົດລາຍງານການຊ່ວຍເຫຼືອຕ່າງປະເທດຂອງກະຊວງແຜນການ ແລະ ການລົງທຶນ, ໃນ ນັບຕັ້ງແຕ່ປີ 1999, ADB ປະຈຳ ສປປ ລາວ ໄດ້ຊອກຫາວິທີທາງຢ່າງຈິງຈັງເພື່ອຮ່ວມມືກັບພາກປະຊາສັງຄົມ ແລະ ອົງການບໍ່ສັງກັດລັດ NGOs [ແລະ] ດຽວນີ້ ຍັງຮັກສາການຕິດຕໍ່ເຈລະຈາຢ່າງເປັນປົກກະຕິກັບທາງອົງການ CSOs ປະເພດຕ່າງໆ.

ສົກປີ 2006–2007, NGOs ປະກອບສ່ວນ $16.47 ລ້ານ (ຫຼື 3.8%) ຈາກທຶນຊ່ວຍເຫຼືອຕ່າງປະເທດທັງໝົດ $432.76 ລ້ານ ໃນ ສປປ ລາວ.

**ນັບຕັ້ງແຕ່ປີ 1999, ADB ປະຈຳ ສປປ ລາວ ໄດ້ຊອກຫາວິທີທາງຢ່າງຈິງຈັງເພື່ອຮ່ວມມືກັບພາກປະຊາສັງຄົມ ແລະ ອົງການບໍ່ສັງກັດລັດ NGOs [ແລະ] ດຽວນີ້ ຍັງຮັກສາການຕິດຕໍ່ເຈລະຈາຢ່າງເປັນປົກກະຕິກັບທາງອົງການ CSOs ປະເພດຕ່າງໆ.**

ໃນສົກປີ 2007–2008, ຕົວເລກນີ້ໄດ້ເພີ່ມຂຶ້ນເປັນ $17.88 ລ້ານ (ຫຼື 4.3%) ຈາກເງິນຊ່ວຍເຫຼືອທັງໝົດ $413.44 ລ້ານ. ຕົວເລກທາງການເຫຼົ່ານີ້ບໍ່ລວມເອົາບາງແຫຼ່ງທຶນຊ່ວຍເຫຼືອຈາກຕ່າງປະເທດ ໂດຍສະເພາະ ຈາກແຫຼ່ງທຶນຊ່ວຍເຫຼືອສອງຝ່າຍ, ແລະ ມັນບໍ່ຈະແຈ້ງວ່າການປະກອບສ່ວນຂອງ INGOs ແມ່ນການໃຫ້ທຶນ 'ໃໝ່' ທັງໝົດຈາກແຫຼ່ງທຶນນອກປະເທດຫຼືບໍ່. ແນວໃດກໍ່ຕາມ ຕົວເລກເຫຼົ່ານີ້ສະທ້ອນໃຫ້ເຫັນວ່າ ສ່ວນແບ່ງຂອງການໃຫ້ທຶນດ້ານການພັດທະນາທີ່ນຳເຂົ້າມາໂດຍ NGOs ສູ່ປະເທດລາວ ແມ່ນຢູ່ໃນລະດັບສູງ ສຳລັບເຂດພາກພື້ນ.

ໃນຊຸມປີຜ່ານມານີ້, ສະມາຄົມ NPAs ທ້ອງຖິ່ນໄດ້ເລີ່ມຕົ້ນເຂົ້າເຖິງແຫຼ່ງການໃຫ້ທຶນໃນ ສປປ ລາວ ຜ່ານກົນໄກການໃຫ້ທຶນຊ່ວຍເຫຼືອລ້າຂະໜາດນ້ອຍທີ່ຫຼາກຫຼາຍຂອງຜູ້ໃຫ້ທຶນ. ຄະນະກຳມະການເອີຣົບ, ບັນດາໜ່ວຍງານຕ່າງໆຂອງອົງການສະຫະປະຊາຊາດ, ທະນາຄານໂລກ ແລະ ຫຼາຍໆຜູ້ໃຫ້ທຶນສອງຝ່າຍ ໄດ້ເລີ່ມສະໜອງທຶນຊ່ວຍເຫຼືອ ລ້າຂະໜາດນ້ອຍໃຫ້ແກ່ບັນດາອົງການຈັດຕັ້ງທ້ອງຖິ່ນ ທີ່ເຮັດວຽກ ກ່ຽວກັບ ໂຄງການຫຼຸດຜ່ອນຄວາມທຸກຍາກຢູ່ພາຍໃນປະເທດລາວ.

ອີງໃສ່ຜົນການສຶກສາໜຶ່ງ, ວິທີການທີ່ຖືກສະເໜີແນະໃນການສະໜັບສະໜູນພາກປະຊາສັງຄົມຜ່ານໄລຍະເລີ່ມຕົ້ນນີ້ຄວນຈະແມ່ນທັງວິທີການແຕ່ເທິງລົງລຸ່ມ ແລະ ແຕ່ລຸ່ມຂຶ້ນເທິງ.[6] ນັ້ນໝາຍຄວາມວ່າ, ບັນດາຄູ່ຮ່ວມງານດ້ານການພັດທະນາຄວນເຮັດວຽກເພື່ອປັບປຸງຄວາມເຂົ້າໃຈ ແລະ ການຍອມຮັບເອົາພາກປະຊາສັງຄົມ ເຂົ້າໃນໝູ່ຜູ້ກຳນົດນະໂຍບາຍ ໃນຂະນະທີ່ຍັງເຮັດວຽກກັບປະຊາຊົນ, CSOs, ແລະ ຊຸມຊົນເພື່ອເພີ່ມຊ່ອງວ່າງ ສຳລັບ ການເຂົ້າຮ່ວມຢ່າງຖືກຕ້ອງຕາມກົດໝາຍ ແລະ ຈິງຈັງ. ສິ່ງນີ້ອາດຈະຈຳເປັນຕ້ອງມີການພົວພັນໃນລະດັບນະໂຍບາຍຜ່ານກົນໄກການປະສານງານດ້ານການພັດທະນາທາງການ, ໃນຂະນະທີ່ຊອກຫາໂອກາດເພື່ອດຶງດູດເອົາ CSOs ເຂົ້າມາມີສ່ວນຮ່ວມໃນບົດບາດເປັນຂົວຕໍ່ລະຫວ່າງ ຊຸມຊົນ, ຜູ້ໃຫ້ທຶນ ແລະ ລັດຖະບານ.[7]

## ຄວາມອາດສາມາດຂອງອົງການຈັດຕັ້ງບໍ່ສັງກັດລັດ (NGO)

ໃນຕະຫຼອດສອງສາມທົດສະວັດທີ່ຜ່ານມາ, ຫຼາຍໆ INGOs ໄດ້ສະສົມປະສົບການອັນລ້ຳຄ່າໃນການເຮັດວຽກຢູ່ໃນສະພາບສັງຄົມການເມືອງທີ່ບໍ່ຄືໃຜຂອງລາວ, ໂດຍສະເພາະ ໃນການພັດທະນາຊຸມຊົນແບບມີສ່ວນຮ່ວມ. ໃນບາງອົງການມີພະນັກງານທີ່ມີຄວາມຮູ້ໃນດ້ານການນຳໃຊ້ຊັບພະຍາກອນດ້ານພາສາ ແລະ ວັດທະນະທຳ ແລະ ມີວິທີການເຮັດວຽກກັບຊຸມຊົນທີ່ຖືກຕັດຂາດ ແລະ ທຸກຍາກທີ່ສຸດ ທີ່ບໍ່ປະກົດມີໃຫ້ເຫັນໄດ້ຈາກບ່ອນອື່ນ. ຍ້ອນເຫດຜົນນີ້, INGOs ຈຶ່ງສາມາດເປັນຄູ່ຮ່ວມງານທີ່ໜ້າສົນໃຈທີ່ສຸດໃນການກະ ກຽມ, ການຕິດຕາມ ແລະ ການຈັດຕັ້ງປະຕິບັດບັນດາໂຄງການ. ແນວໃດກໍ່ຕາມ, ຕ້ອງໄດ້ຮັບຮູ້ວ່າ INGOs ໃນ ສປປ ລາວ ອາດຈະມີປະສົບການຈຳກັດໃນເລື່ອງລະບົບ ແລະ ຂະບວນການຂອງ ADB, ແລະ ຕ້ອງໄດ້ສຸມເວລາ ແລະ ຊັບພະຍາກອນຢ່າງພຽງພໍຕໍ່ກັບທຸກໆການເປັນຄູ່ຮ່ວມງານເພື່ອຮັບປະກັນວ່າປະສົບການແມ່ນເປັນໄປໃນທາງບວກ, ແລະ ຄວາມສຳເລັດແມ່ນສາມາດນຳໄປໝູນໃຊ້ໄດ້ອີກໃນອະນາຄົດ. ນອກນັ້ນ ຄູ່ຮ່ວມງານລັດຖະບານອາດຈະຍັງບໍ່ຄຸ້ນເຄີຍກັບ NGOs ແລະ ຍ້ອນເຫດ ຜົນຫຍັງ ມັນຈຶ່ງສົມຄວນລວມເອົາພວກເຂົາເຂົ້າເປັນຄູ່ຮ່ວມງານໃນໂຄງການ.

NPAs ຍັງຢູ່ໃນໄລຍະເລີ່ມຕົ້ນຂອງການວິວັດພັດທະນາ ໃນ ສປປ ລາວ, ແລະ ສ່ວນໃຫຍ່ພົບວ່າຄວາມສາມາດຂອງເຂົາເຈົ້າຍັງຈຳກັດໃນເວລາສະໝັກຂໍເອົາ ແລະ ຄຸ້ມຄອງບໍລິຫານທຶນຊ່ວຍເຫຼືອລ້າຂະໜາດນ້ອຍ. ມີບາງກໍລະນີຍົກເວັ້ນ ຕໍ່ກັບກົດເກນນີ້, ໃນອົງການຈັດຕັ້ງທີ່ໄດ້ດຳເນີນງານມາເປັນໄລຍະເວລາດົນນານຜ່ານຊ່ອງທາງກົດໝາຍອື່ນ ເຊັ່ນວ່າ ການຈົດທະບຽນເປັນທຸລະກິດບໍ່ຫວັງຜົນກຳໄລ (ຕົວຢ່າງວ່າ Sunlabob, ກຸ່ມພະລັງງານຍືນຍົງ), ຫຼື ເປັນໂຄງການ 'ຄ່ອຍໆປ່ຽນແປງ' ຂອງ INGO (ຕົວຢ່າງ ກຸ່ມຊ່ວຍເຫຼືອຜູ້ລອດຊີວິດຈາກລະເບີດບໍ່ທັນແຕກ UXO, COPE). ມາຮອດປະຈຸບັນ ຍັງບໍ່ມີຕົວຢ່າງໃດໆ ກ່ຽວກັບ ສະມາຄົມ NPAs ທ້ອງຖິ່ນທີ່ມີບົດບາດເປັນທາງການໃນບັນດາໂຄງການ ADB. ການເຮັດວຽກກັບ NPAs ຄວນເອົາໃຈໃສ່ເຖິງທັງທາງດ້ານຄວາມໃໝ່ຂອງພາກປະຊາສັງຄົມ ໃນ ສປປ ລາວ ແລະ ຄວາມສິ້ນເຄີຍດ້ານແນວຄວາມຄິດ ຕໍ່ກັບຄູ່ຮ່ວມງານລັດຖະບານ, ແລະ ບັນຫາຄວາມອາດສາມາດທີ່ເປັນໄປໄດ້ໃນການປະຕິບັດຕາມຂະບວນການຂອງ ADB. ແນວໃດກໍ່ຕາມ, ການເຂົ້າຮ່ວມຢ່າງມີການຈັດຕັ້ງທີ່ດີ ແລະ ໃນຂອບເຂດນ້ອຍ ສາມາດໃຫ້ຜົນປະໂຫຍດແກ່ບັນດາໂຄງການຂອງ ADB ຜ່ານຄວາມເປັນເຈົ້າການຂອງຊຸມຊົນ ແລະ ຄວາມຍືນຍົງທີ່ເພີ່ມຂຶ້ນ.

ອົງການຈັດຕັ້ງມະຫາຊົນ, ໂດຍສະເພາະ ສະຫະພັນແມ່ຍິງລາວ, ໄດ້ຮັບເອົາບົດບາດທີ່ຍິ່ງໃຫຍ່ນຳຜູ້ໃຫ້ທຶນໃນຊຸມປີທີ່ຜ່ານມານີ້. ຄວາມເຂັ້ມແຂງຂອງເຂົາເຈົ້າໃນການເຊື່ອມໂຍງກັບຂັ້ນຮາກຫຍ້າ, ໂດຍທີ່ບາງອົງການຈັດຕັ້ງແມ່ນມີສະ ມາຊິກຢູ່ທຸກໆບ້ານໃນທົ່ວປະເທດ.

## ບັນຊີລາຍຊື່

ເຄືອຂ່າຍ INGO ຮັກສາຖານຂໍ້ມູນອອນລາຍຂອງບັນດາສະມາຊິກ NGO ແລະ ໂຄງການຂອງເຂົາເຈົ້າ (ເບິ່ງທີ່ www. directoryofngos. org). ນອກຈາກນະຄອນຫຼວງວຽງຈັນ, ອຳນາດການປົກຄອງຂັ້ນແຂວງ ແລະ ເມືອງ ກໍ່ສາມາດຊ່ວຍໃນເລື່ອງການກຳນົດບັນດາໂຄງການທາງການຂອງ INGO ໃນເຂດພື້ນທີ່ຂອງເຂົາເຈົ້າ. NPAs ແມ່ນມີບົດບາດນ້ອຍກວ່າ ແລະ ປົກກະຕິແລ້ວ ການຕິດຕໍ່ພົວພັນສ່ວນຫຼາຍແມ່ນເຮັດໂດຍຜ່ານ ສ່ວນບຸກຄົນ, ເຖິງແມ່ນວ່າ LNN ອາດຈະສາມາດຊ່ວຍເຫຼືອໃນດ້ານການກຳນົດກຸ່ມຕ່າງໆທີ່ເຮັດວຽກໃນຂະແໜງການ ຫຼື ສະຖານທີ່ສະເພາະໃດໜຶ່ງ.

## ການຮ່ວມມື ລະຫວ່າງ ADB–ພາກປະຊາສັງຄົມ

ADB ເປີດຫ້ອງການຜູ້ຕາງໜ້າປະຈຳປະເທດລາວ (LRM) ໃນເດືອນກໍລະກົດປີ 2001. LRM ເຮັດໜ້າທີ່ປະສານງານການເຈລະຈາດ້ານນະ

ໂຍບາຍລະດັບສູງ ແລະ ການຊ່ວຍເຫຼືອ, ແລະ ຊ່ວຍໃນເລື່ອງການກໍານົດ
ແຜນງານປະ ຈໍາປະເທດ, ການຊ່ວຍເຫຼືອດ້ານວິຊາການ, ການບໍລິຫານ
ຄຸ້ມຄອງ, ການກໍານົດໂຄງການ, ການຄຸ້ມຄອງດ້ານຍຸດທະສາດ, ແລະ
ການບໍລິຫານໂຄງການ. ນັບແຕ່ປີ 1999, ADB ປະຈໍາປະເທດລາວ ໄດ້
ຊອກຫາວິທີທາງຢ່າງຈິງຈັງໃນການເຮັດວຽກກັບພາກປະຊາສັງຄົມ ແລະ
NGOs. ດຽວນີ້ LRM ຮັກສາການຕິດຕໍ່ເຈລະຈາຢ່າງເປັນປົກກະຕິ
ກັບ CSOs ປະເພດຕ່າງໆ ກ່ຽວກັບເລື່ອງການຊ່ວຍເຫຼືອຂອງ ADB ໃນ
ປະເທດ, ເຊິ່ງລວມທັງ ການປຶກສາຫາລືໃນໄລຍະການກໍານົດຍຸດທະ
ສາດແລະແຜນງານການຮ່ວມມືກັບປະເທດ (CPS) ແລະ ໃນລະຫວ່າງ
ຂະບວນການສ້າງໂຄງການໃໝ່. LRM ມີສະມາຊິກຜູ້ໜຶ່ງທີ່ຖືກແຕ່ງຕັ້ງ
ໃຫ້ເປັນຜູ້ປະສານງານ NGO ທີ່ຮັບຜິດຊອບການພົວພັນກັບພາກປະຊາ
ສັງຄົມໃນ ສປປ ລາວ ແລະ ສາມາດໃຫ້ຄໍາແນະນໍາ ກ່ຽວກັບ ວ່າ NGOs
ໃດແດ່ທີ່ຄວນໄປພົບສໍາລັບ ຂົງເຂດວຽກງານຕ່າງໆຂອງ ADB.

ຂະແໜງການຕ່າງໆໃນວຽກງານຂອງ ADB ໃນ ສປປ ລາວ ຖືກກໍານົດ,
ໂດຍຮ່ວມກັບລັດຖະບານ, ຜ່ານຂະບວນ ການວິເຄາະເທື່ອລະຂັ້ນ ແລະ
ການກໍານົດບູລິມະສິດ, ແລະ ອະທິບາຍລາຍລະອຽດໃນ CPS 2007–
2011. ຍຸດທະສາດ CPS ໃໝ່ ສໍາລັບ ສົກປີ 2012–2016 ທີ່ພວມກະກຽມ.

ນອກນັ້ນ ADB ຍັງເປັນປະທານຮ່ວມຂອງຄະນະເຮັດວຽກຕາມຂະແໜງ
ການຕໍ່ໄປນີ້: ຄະນະເຮັດວຽກ ກ່ຽວກັບ ປະເດັນເສດຖະກິດມະຫາພາກ
ແລະ ການພັດທະນາພາກເອກະຊົນ (ປະທານ: ກະຊວງແຜນການ ແລະ
ການລົງທຶນ) ແລະ ຄະນະເຮັດວຽກຂະແໜງໂຄງລ່າງ (ກັບຍີ່ປຸ່ນ; ປະທານ:
ກະຊວງຄົມມະນາຄົມ, ຂົນສົ່ງ, ໄປສະນີ ແລະ ກໍ່ ສ້າງ). ນອກນັ້ນ ADB
ຍັງເປັນປະທານຮ່ວມຂອງຄະນະເຮັດວຽກຍ່ອຍ ສໍາລັບ ວຽກງານຄຸ້ມຄອງ
ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ (ຮ່ວມກັບຫົວໜ້າອົງການ
ຊັບພະຍາກອນນໍ້າ ແລະ ສິ່ງແວດລ້ອມ), ພາຍໃຕ້ ຄະນະເຮັດວຽກດ້ານ
ກະສິກໍາ ແລະ ຊັບພະຍາກອນທໍາມະຊາດ. ໃນປະຈຸບັນ, ອົງການ CSOs
ບໍ່ມີຕົວແທນໃນບັນດາຄະ ນະເຮັດວຽກເຫຼົ່ານີ້, ເຖິງແມ່ນວ່ານີ້ແມ່ນຂົງ
ເຂດໜຶ່ງທີ່ບາງອົງການອາດຈະມີກິດຈະກໍາທີ່ສໍາຄັນທີ່ອາດຈະເໝາະສົມ
ໃນຮ່ວມເອົາການປະສານງານດ້ານນະໂຍບາຍຂອງຂະແໜງ. ນີ້ອາດຈະ
ສະໜັບສະໜູນແນວຄິດຂອງລັດຖະ ບານທີ່ວ່າຕ້ອງການໃຫ້ CSOs ດໍາ
ເນີນງານໃນ ສປປ ລາວ ພາຍໃນຂອບເຂດຂອງນະໂຍບາຍທາງການ.

## ບັນດາກິດຈະກໍາທີ່ສະໜັບສະໜູນໂດຍ ADB ທີ່ກ່ຽວຂ້ອງກັບພາກປະຊາສັງຄົມ

ADB ຖືວ່າອົງການ CSOs, ລວມທັງອົງການບໍ່ສັງກັດລັດຖະບານ
(NGOs), ເປັນພາກສ່ວນໜຶ່ງທີ່ສໍາຄັນໃນຂະບວນການພັດທະນາ ແລະ
ຮ່ວມມືກັບເຂົາເຈົ້າເພື່ອປັບປຸງຜົນກະທົບ, ຄວາມຍືນຍົງ, ແລະ ຄຸນນະພາ
ບຂອງການບໍລິການ. NGOs ໃຫ້ການເພີ່ມຄຸນຄ່າໃນການສົ່ງເສີມການ
ພັດທະນາແບບຍືນຍົງ ຜ່ານການປ່ຽນແປງໃໝ່ ການກໍາໜົດວິທີການ ແລະ
ຮູບແບບໃໝ່ໆສໍາລັບ ກິດຈະກໍາການພັດທະນາສະເພາະ ແລະ ອາໄສ
ໃສ່ຄວາມຮູ້ທີ່ໃກ້ຊິດຂອງຊຸມຊົນທ້ອງຖິ່ນ; ຄວາມຮັບຜິດຊອບ-ການຊ່ວຍ
ຮັບປະກັນວ່າອົງປະກອບຂອງໂຄງການຖືກຈັດຕັ້ງປະຕິບັດຕາມທີ່ໄດ້ຄາດ
ຄະເນ ແລະ ວາງແຜນໄວ້; ການຕອບສະໜອງ-ການສົ່ງເສີມການຈັດຕັ້ງ
ປະຕິບັດໂຄງການເພື່ອຕອບສະໜອງຄວາມຕ້ອງການຂອງທ້ອງຖິ່ນ; ການ
ມີສ່ວນຮ່ວມ-ການເຮັດໜ້າທີ່ເປັນຂົວຕໍ່ ລະຫວ່າງ ໂຄງການ ແລະ ຊຸມຊົນທີ່
ໄດ້ຮັບຜົນກະທົບ, ແລະ ການສະໜອງໂຄງສ້າງ ສໍາລັບ ການມີສ່ວນຮ່ວມ
ຂອງປະຊາຊົນ; ແລະ ຄວາມຍືນຍົງ-ການເສີມສ້າງຄວາມຕໍ່ເນື່ອງໃນວຽກ
ງານໂຄງການ, ໂດຍສະເພາະໃນເວລາທີ່ໜ່ວຍງານຈັດຕັ້ງປະ ຕິບັດຍັງ
ຂາດຄວາມອາດສາມາດ ຫຼື ໃນເວລາມີການປ່ຽນແປງດ້ານພະນັກງານ.

ADB ປະຈໍາ ສປປ ລາວ ກໍາລັງຈັດຕັ້ງປະຕິບັດຫຼາຍໆໂຄງການທີ່ລວມ
ເອົາ CSOs ໃນຫຼາກຫຼາຍວິທີການເພື່ອໝູນໃຊ້ຈຸດແຂງໃນຂົງເຂດເຫຼົ່ານີ້.
ໜຶ່ງໃນບັນດາໂຄງການໃຫຍ່ທີ່ ADB ອໍານວຍຄວາມສະດວກທີ່ລວມເອົາ
CSOs ໃນເຂດພາກພື້ນ ແມ່ນການກະກຽມໄລຍະທີສອງ.[8] ໄລຍະກ່ອນນີ້,
ທີ່ໄດ້ຮັບການສະໜັບສະໜູນຈາກລັດຖະບານຟິນແລນ ແລະ ສະວີເດັນ,
ເນັ້ນໜັກໃສ່ການເສື່ອມສານບັນຫາດ້ານສິ່ງແວດລ້ອມເຂົ້າໃນວຽກງານ
ການຂົນສົ່ງ, ພະລັງ ງານ, ທ່ອງທ່ຽວ ແລະ ຂະແໜງກະສິກໍາ ຂອງແຜນ
ງານການຮ່ວມມືດ້ານເສດຖະກິດຂອງ GMS.[9] ມັນສົ່ງເສີມການນໍາໃຊ້
ເຄື່ອງມືການວາງແຜນດ້ານການພັດທະນາທີ່ປະສົມປະສານສິ່ງແວດລ້ອມ
ເຂົ້າໃນການພັດທະນາແບບຍືນຍົງ. ແຜນງານແລວເຊື່ອມຕໍ່ການອະນຸລັກ
ຊີວະນາໆພັນ GMS (GMS BCI) ມີຈຸດປະສົງແນໃສ່ປ້ອງກັນການ
ພັງທະລາຍຂອງລະບົບນິເວດວິທະຍາ ທີ່ຈະເກີດຈາກຄວາມກົດດັນທີ່ມີ
ໃນການພັດທະນາເສດຖະກິດ ຕາມແລວເສດຖະກິດຂອງ GMS, ແລະ
ກໍາລັງເຮັດວຽກຢູ່ຫົກເຂດພື້ນທີ່ທົດລອງ ໂດຍເປັນຄູ່ຮ່ວມງານກັບIUCN
ແລະ ກອງທຶນສັດປ່າໂລກ (WWF).

ໂຄງການທົດລອງໜຶ່ງທີ່ຖືກຈັດຕັ້ງປະຕິບັດໂດຍ INGO, ອົງການ
ພັດທະນາປະເທດເນເທີແລນ SNV, ມີຈຸດປະ ສົງເພື່ອປັບປຸງຄຸນນະພາ
ບຊີວິດແລະໂອກາດໃນການທໍາມາຫາກິນຂອງຄອບຄົວຊາວຊົນນະບົດ,
ແລະ ເພື່ອຫຼຸດຜ່ອນ ການນໍາໃຊ້ຂອງຊັບພະຍາກອນຊີວະມວນ ໃນ ສປປ
ລາວ ໂດຍການຊຸດຄົ້ນຫາເອົາຜົນປະໂຫຍດທາງຕະຫຼາດ ແລະ ບໍ່ແມ່ນ
ຕະຫຼາດຂອງອາຍແກັສຊີວະພາບຈາກຄົວເຮືອນ. SNV ໄດ້ສ້າງຕັ້ງຫຼາຍໆ
ກິດຈະກໍາທົດລອງ ກ່ຽວກັບ ອາຍແກັສຊີວະພາບ ເພື່ອສ້າງພື້ນຖານຂອງ
ແຜນງານອາຍແກັສຊີວະພາບ ທີ່ໃຫຍ່ກວ່າໃນອະນາຄົດທີ່ຈະສ້າງຕັ້ງຂະ
ແໜງ ອາຍແກັສຊີວະພາບຈາກຄົວເຮືອນທີ່ໃຫ້ປະໂຫຍດທາງການຄ້າ.
ໂຄງການທົດລອງນີ້ແມ່ນສ່ວນໜຶ່ງຂອງແຜນງານ GMS.[10]

ອີກກິດຈະກໍາໜຶ່ງຂອງ GMS ໃນຂະແໜງການທ່ອງທ່ຽວ ທີ່ເຮັດວຽກກັບ
ອົງການທ່ອງທ່ຽວແຫ່ງຊາດ ລາວ ໄປພ້ອມກັບ INGOs ອົງການ SNV
ແລະ ອົງການອະນຸລັກສັດປ່າ ເພື່ອຊ່ວຍເຫຼືອໃຫ້ຊຸມຊົນທ້ອງຖິ່ນໄດ້ຮັບ
ຜົນປະໂຫຍດ ຈາກການເຕີບໃຫຍ່ຂະຫຍາຍຕົວຂອງການທ່ອງທ່ຽວ ໃນ
ສປປ ລາວ. ໂຄງການສະໜອງການຝຶກອົບຮົມໃຫ້ແກ່ຊຸມຊົນ ກ່ຽວກັບ
ການນໍາທ່ຽວ, ການຮັບຕ້ອນແຂກ, ການແຕ່ງຢູ່ຄົວກິນ, ການຄຸ້ມຄອງ
ການທ່ອງທ່ຽວ, ແລະ ການເຮັດການຕະຫຼາດ. ນອກນັ້ນ ໂຄງການຍັງ
ຊ່ວຍຊຸມຊົນສ້າງໂຄງລ່າງດ້ານການທ່ອງທ່ຽວ, ເຊັ່ນວ່າ ເຮືອນພັກ, ຫ້ອງ
ນໍ້າ, ພື້ນທີ່ພັກຜ່ອນ, ແລະ ການປັບປຸງຖະໜົນຫົນທາງ. ນອກນັ້ນ ມັນຍັງ
ສະໜັບສະໜູນການພັດທະນາຜະລິດຕະພັນ ແລະ ການທ່ອງທ່ຽວທີ່ຖືກ
ອອກແບບ ແລະ ດໍາເນີນງານໂດຍຊຸມຊົນທ້ອງຖິ່ນ ໂດຍການຮ່ວມມືກັບ
ພາກເອກະຊົນ, ແລະ ການລິເລີ່ມດ້ານຕ່ອງໂສ້ການສະໜອງ, ທີ່ເຊື່ອມ
ໂຍງການຜະລິດສິນຄ້າກະສິກໍາ ແລະ ເຄື່ອງຫັດຖະກໍາໂດຍຊຸມຊົນທີ່ທຸກ
ຍາກ ກັບເສດຖະກິດການທ່ອງທ່ຽວຂອງທ້ອງຖິ່ນ, ໃນເຂດທ້ອງຖິ່ນພາກ
ພື້ນ ແລະ ລະ ດັບປະເທດ. ນອກນັ້ນ ໂຄງການຍັງແນໃສ່ການປົກປ້ອງ
ວັດທະນາທໍາຊົນເຜົ່າ ແລະ ຫຼຸດຜ່ອນຜົນກະທົບດ້ານລົບຂອງການທ່ອງ
ທ່ຽວໃຫ້ມີນ້ອຍສຸດ.[11]

ໃນປີ 2010, ADB ໄດ້ອະນຸມັດການໃຫ້ທຶນເພີ່ມເຕີມເພື່ອສືບຕໍ່ຄວາມ
ຄືບໜ້າ ແລະ ຂະຫຍາຍຄວາມພະຍາຍາມພາຍໃຕ້ໂຄງການທີ່ກໍາລັງດໍາ
ເນີນ[12] ເພື່ອເສີມສ້າງຄວາມອາດສາມາດຂອງຊຸມຊົນໃນການຄຸ້ມຄອງ
ສິ່ງອໍານວຍຄວາມສະດວກດ້ານການສະໜອງນໍ້າ ແລະ ສຸຂະອະນາໄມ
(WSS). ໂຄງການໃຫ້ການສະໜັບສະໜູນລະບົບສະໜອງນໍ້າ ແລະ ການ
ປັບປຸງເຂດຕົວເມືອງທີ່ກ່ຽວຂ້ອງໃນ 12 ຕົວເມືອງນ້ອຍ ໃນແຂວງທຸກຍາກ
ຢູ່ພາກເໜືອຂອງປະເທດລາວ. ໃນປີ 2009, ໃນການກະກຽມຂະຫຍາຍ
ແຜນງານ, ADB ໄດ້ດໍາເນີນກອງປະຊຸມສໍາມະນາ ແລະ ສ້າງຕັ້ງຂອບ
ວຽກດ້ານສະຖາບັນໃນທັງໝົດ 12 ເມືອງທີ່ມີໂຄງການ. ກິດຈະກໍາລະດົມ
ຊຸມຊົນ ແລະ ວຽກງານກໍ່ສ້າງດ້ານວັດຖຸ ສໍາລັບ ຕົວເມືອງໄລຍະທີ 1 ໄດ້
ເຮັດສໍາເລັດໃນປີ 2009, ໃນກິດຈະກໍາຂອງຕົວເມືອງໄລຍະທີ 2 ໄດ້ຖືກ
ກໍານົດໃຫ້ມີການຈັດຕັ້ງປະຕິບັດໃນປີ 2010. ໂຄງການໄດ້ລວມເອົາການມີ
ສ່ວນຮ່ວມຢ່າງໃຫຍ່ຫຼວງຂອງຊຸມຊົນເພື່ອເສີມສ້າງຄວາມເປັນເຈົ້າຂອງຂອງ
ທ້ອງຖິ່ນຕໍ່ກັບສິ່ງອໍານວຍຄວາມສະດວກ WSS ແລະ ເພື່ອເຮັດໃຫ້ການ

ຫຼຸດຜ່ອນຄວາມ ທຸກຍາກ ແລະ ຜົນປະໂຫຍດດ້ານສຸຂະພາບມີຫຼາຍສຸດ. ໃນທັງໝົດ 12 ຕົວເມືອງ, ມີການສະໜັບສະໜູນຢ່າງເຂັ້ມແຂງ ສໍາລັບ ການມີສ່ວນຮ່ວມຂອງຊຸມຊົນໃນການຈັດຕັ້ງປະຕິບັດໂຄງການ. ອົງການຈັດຕັ້ງມະຫາຊົນ ເຊັ່ນວ່າ ສະຫະພັນແມ່ຍິງ ແລະ ແນວລາວສ້າງຊາດ ຈະແມ່ນສະມາຊິກຂອງໜ່ວຍຈັດຕັ້ງປະຕິບັດໂຄງການເພື່ອຊ່ວຍອໍານວຍຄວາມສະດວກເລື່ອງການມີສ່ວນຮ່ວມ ແລະ ການຮັບຮູ້ເຂົ້າໃຈຂອງຊຸມຊົນ, ໂດຍສະເພາະ ໃນກຸ່ມແມ່ຍິງ. ໜ່ວຍງານ WSSອີງໃສ່ຊຸມຊົນ ແລະ ທີມປະຕິບັດງານຂອງຊຸມຊົນໄດ້ຖືກສ້າງຕັ້ງຂຶ້ນຮຽບຮ້ອຍແລ້ວ ແລະ ກໍາລັງສະໜັບ ສະໜູນການຈັດຕັ້ງປະຕິບັດໂຄງການຢ່າງຈິງຈັງ. ມາຮອດປະຈຸບັນ, ເກືອບໜຶ່ງສ່ວນສາມຂອງພະນັກງານທີ່ຖືກເລືອກເອົາແມ່ນແມ່ຍິງ.

## ກອງທຶນຫຼຸດຜ່ອນຄວາມທຸກຍາກປະເທດຍີ່ປຸ່ນ

ກອງທຶນຫຼຸດຜ່ອນຄວາມທຸກຍາກປະເທດຍີ່ປຸ່ນ (JFPR) ແມ່ນກອງທຶນຊ່ວຍເຫຼືອລ້າທີ່ຖືກສ້າງຕັ້ງຂຶ້ນໂດຍລັດຖະ ບານປະເທດຍີ່ປຸ່ນ ແລະ ADB ໃນເດືອນພຶດສະພາ ປີ 2000. ຈາກການປະກອບສ່ວນໃນເບື້ອງຕົ້ນຈໍານວນ $90 ລ້ານ, ປະຈຸບັນນີ້ ກອງທຶນມີທຶນປະກອບສ່ວນຫຼາຍກວ່າ $392 ລ້ານ, ເຊິ່ງໃນນັ້ນ $335 ລ້ານ ໄດ້ໃຫ້ສັນຍາຈະຊ່ວຍເຫຼືອແລ້ວ. ກອງທຶນ JFPR ໃຫ້ການຊ່ວຍເຫຼືອບັນດາລູກຄ້າຂອງ ADB ເພື່ອສະໜອງການບັນເທົາທຸກໂດຍກົງໃຫ້ແກ່ກຸ່ມຄົນຜູ້ທຸກຍາກທີ່ສຸດແລະດ້ອຍໂອກາດທີ່ສຸດໃນສັງຄົມ ໃນຂະນະທີ່ເສີມສ້າງຄວາມອາດສາມາດຂອງເຂົາເຈົ້າເພື່ອຊ່ວຍເຫຼືອຕົນເອງ ແລະ ການສ້າງລາຍຮັບ. ໂດຍສະເພາະແລ້ວ, JFPR ລິເລີ່ມ ແລະ ສະໜັບສະໜູນແຜນງານໃໝ່ໆທີ່ມີທ່າແຮງສູງ ສໍາລັບ ການປັບປຸງສະພາບການຂອງປະເທດທີ່ໄດ້ຮັບຜົນກະທົບ; ສະໜອງຜົນປະໂຫຍດທີ່ເຫັນໄດ້ຂ້ອນຂ້າງໄວ ຜ່ານບັນດາການລິເລີ່ມທີ່ສາມາດຖືກພັດທະນາ ແລະ ເຮັດໃຫ້ມີຄວາມຍືນຍົງໃນໄລຍະຍາວ; ແລະ ໃຫ້ການຊ່ວຍເຫຼືອປະຊາຊົນທ້ອງຖິ່ນ ແລະ ພາກປະຊາສັງຄົມໃນການອອກແບບ ແລະ ຈັດຕັ້ງປະຕິບັດບັນດາແຜນງານຕ່າງໆ. ກອງທຶນ JFPR ໃຫ້ໂອກາດແກ່ຊຸມຊົນທ້ອງຖິ່ນ ແລະ ອົງການ CSOs, ລວມທັງ NGOs, ໃນການເຂົ້າຮ່ວມຢ່າງຈິງຈັງໃນຂະບວນການພັດທະນາ.

ການມີສ່ວນຮ່ວມຂອງ NGO ແມ່ນຝັງເລິກຢູ່ໃນການດໍາເນີນງານຂອງ JFPR - JFPR ຖືກຮັບຮູ້ຢ່າງກວ້າງ ຂວາງວ່າເປັນໜຶ່ງໃນບັນດາແຫຼ່ງທຶນຊ່ວຍເຫຼືອລ້າຕົ້ນຕໍທີ່ມີໃຫ້ NGOs. NGOs ແລະ ກຸ່ມຊຸມຊົນເຂົ້າຮ່ວມຢ່າງເປັນປົກກະຕິໃນໄລຍະຕ່າງໆຂອງຮອບວຽນໂຄງການ. ພວກເຂົາເຂົ້າຮ່ວມໃນຖານະເປັນໜ່ວຍງານຄຸ້ມຄອງບໍລິຫານ, ໜ່ວຍງານຈັດຕັ້ງປະຕິບັດ; NGO ທີ່ເປັນຊັບພະຍາກອນທີ່ສະໜອງຂໍ້ມູນຂ່າວສານ, ການຈັດຕັ້ງຊຸມຊົນ, ຫຼື ບາງການບໍລິການສະເພາະອື່ນ; ຫຼື ທີ່ປຶກສາໃຫ້ແກ່ ADB ໃນລະຫວ່າງ ໄລຍະຕິດຕາມກວດກາໂຄງການ.

ໂຄງການໜຶ່ງໃນຫວ່າງບໍ່ດົນມານີ້ຂອງ JFPR ກວມເອົາເກົ້າຊຸມຊົນຂອງຊົນເຜົ່າສ່ວນນ້ອຍທີ່ທຸກຍາກທີ່ດໍາລົງຊີວິດໃນເຂດພູສູງທາງທິດຕາເວັນຕົກສ່ຽງເໜືອຂອງແຂວງຫຼວງນໍ້າທາ. ໂຄງການໃຫ້ການສະໜັບສະໜູນການກໍ່ສ້າງໂຄງລ່າງໃນຟາມ - ລວມທັງລະບົບຊົນລະປະທານໃໝ່ ສໍາລັບ ເນື້ອທີ່ນາ 30 ເຮັກຕາ, ເຊັ່ນດຽວກັນກັບ ການປັບປຸງລະບົບຊົນລະປະທານສໍາລັບ ອີກ 65 ເຮັກຕາ ທີ່ຊ່ວຍຫັນປ່ຽນວິທີເຮັດດ້ານກະສິກໍາຂອງເຂົາເຈົ້າ ຈາກການເຮັດໄຮ່ເລື່ອນລອຍມາເປັນການກະສິກໍາແບບຄົງທີ່, ເຊິ່ງຕ້ອງການໃຫ້ມີການນໍາໃຊ້ທີ່ດິນແບບຖາວອນຄົງທີ່. ໂຄງການນີ້ເປັນໂຄງການຊ່ວຍເສີມໃຫ້ແກ່ໂຄງການແລວເສດຖະກິດພາກເໜືອຂອງ GMS. ມັນຖືກຈັດຕັ້ງປະຕິບັດໂດຍ INGOs ທີ່ມີຊື່ວ່າອົງການບັນເທົາທຸກ ແລະ ການພັດທະນາ (ADRA Lao) ແລະ ອົງການ GAA.[13]

ກອງທຶນ JFPR ຍັງໃຫ້ການສະໜັບສະໜູນການເສີມສ້າງຄວາມອາດສາມາດ ສໍາລັບ ການຄຸ້ມຄອງໂຄງການໃນໝູ່ພະນັກງານຂອງພະແນກກະສິກໍາ ແລະ ປ່າໄມ້ແຂວງ, ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ; ສະຫະພັນແມ່ຍິງລາວ ເພື່ອສົ່ງເສີມການສ້າງຄວາມອາດສາມາດ ສໍາລັບ ການພັດທະນາທີ່ເອົາຊຸມຊົນເປັນແຮງຂັບເຄື່ອນ.[14]

## ຄວາມກັງວົນຂອງອົງການ NGO ກ່ຽວກັບການລິເລີ່ມຂອງ ADB

ADB ຮັບຮູ້ອົງການ NGOs ເປັນຄູ່ຮ່ວມງານດ້ານການພັດທະນາ ແລະ ມີຈຸດປະສົງບັນທຶກເປັນເອກະສານ ແລະ ຕອບສະໜອງຕໍ່ກັບທຸກຄວາມກັງວົນຂອງ NGO ທີ່ປະກົດມີໃນ ລະຫວ່າງ ການອອກແບບ ແລະ ການຈັດຕັ້ງປະຕິບັດບັນດາໂຄງການທີ່ ADB ໃຫ້ການຊ່ວຍເຫຼືອ ແລະ ການລິເລີ່ມອື່ນ. ສູນປະສານງານອົງການບໍ່ສັງກັດລັດຂອງ ADB ເຮັດວຽກປະສານງານກັບບັນດາພະແນກການເພື່ອແຈ້ງໃຫ້ພະນັກງານອາວຸໂສ, ສະມາຊິກສະພາບໍ ລິຫານ, ແລະ ຄະນະຜູ້ບໍລິຫານ ຮັບຮູ້ ກ່ຽວກັບປະເດັນຕ່າງໆ ແລະ ຮັບເອົາຄໍາຄິດເຫັນຕອບກັບ ກ່ຽວກັບ ຄວາມກັງວົນຂອງອົງການ NGO ທີ່ກໍາລັງຖືກແກ້ໄຂ. ຄວາມກັງວົນສະເພາະໃນອາດີດຜ່ານມາປະກອບມີການຈັດຕັ້ງປະຕິບັດແຜນງານດ້ານສັງຄົມ ແລະ ການຕິດຕາມກວດກາຜົນກະທົບໃນປະຈຸບັນ ແລະ ທີ່ອາດເປັນໄປໄດ້ໃນບັນດາໂຄງການກໍ່ສ້າງເຂື່ອນໄຟຟ້ານໍ້າຕົກ, ເຊິ່ງລວມທັງເຂື່ອນໄຟຟ້ານໍ້າເທີນ 2.

## ສູນຂໍ້ມູນຂ່າວສານ

ສູນຊັບພະຍາກອນການຮຽນຮູ້ (LRC) ຂອງແຜນການພະນົມເປັນສໍາລັບການຄຸ້ມຄອງການພັດທະນາ (PPP) ເຊິ່ງແມ່ນສູນຂໍ້ມູນຂ່າວສານໜຶ່ງ ທີ່ເປີດຕ້ອນຮັບຕໍ່ກັບສາທາລະນະ ທີ່ມີການເຂົ້າເຖິງອິນເຕີເນັດໂດຍບໍ່ເສຍຄ່າ ແລະ ມີເອກະສານຂໍ້ມູນຈໍານວນຫຼວງຫຼາຍທີ່ເປັນເຈ້ຍເອກະສານ ແລະ ແບບອີເລັກໂທຣນິກ, ເຊິ່ງຕັ້ງຢູ່ພາຍໃນ ສໍານັກງານ ADB ປະຈໍາ ສປປ ລາວ.

> ສູນຊັບພະຍາກອນການຮຽນຮູ້ຂອງ PPP
> ທະນາຄານພັດທະນາອາຊີ
> ແຈຖະໜົນລ້ານຊ້າງ ແລະ ຖະໜົນສາມແສນໄທ
> ບ້ານສີສະເກດ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ
> www.adb.org/Documents/Phnom-Penh-Plan/
> LRMLRC-Brochure.pdf

## ໝາຍເຫດທ້າຍເອກະສານ

1 ADB. 1999. *ການສຶກສາ ກ່ຽວກັບ ອົງການບໍ່ສັງກັດລັດ NGOs ໃນ ສປປ ລາວ*. ວຽງຈັນ. (ມີໃຫ້ທາງອອນລາຍທີ່ www.adb.org/NGOs/docs/NGOLaoPDR.pdf)

2 R. Delnoye. 2010. ການສໍາຫຼວດ ກ່ຽວກັບ ຂະບວນວິວັດພັດທະນາຂອງພາກປະຊາສັງຄົມໃນ ສປປ ລາວ: ວິທີປະຕິບັດໃນປະຈຸບັນ ແລະ ທ່າແຮງສໍາລັບ ການເຕີບໂຕໃນອະນາຄົດ. ວຽງຈັນ. *ຊຸດເອກະສານເຮັດວຽກຂອງ SDC Mekong Region*. ເລກທີ 2.

3 ສູນການພັດທະນາການສຶກສາ ແລະ SDC ປະຈໍາ ລາວ. 2009. *ຄວາມເປັນໄປໄດ້ຂອງການຕອບໂຕ້ ແລະ ການແຊກແຊງຊ່ວຍເຫຼືອເພື່ອເສີມສ້າງຄວາມອາດສາມາດຂອງພາກປະຊາສັງຄົມໃນ ສປປ ລາວ*. ວຽງຈັນ.

4 ອີງໃສ່ການສໍາພາດໃນເດືອນຕຸລາ ປີ 2010 ກັບພະນັກງານຂອງທະບວງການປົກຄອງ ແລະ ການຄຸ້ມຄອງລັດຖະກອນ, ວຽງຈັນ.

5 R. Delnoye. 2010. ໜ້າ 42.

6 R. Delnoye. 2010.

7 ມາດຕາ 49.1 ຂອງດໍາລັດວ່າດ້ວຍສະມາຄົມຊີ້ບອກເຈດຕະນາຂອງລັດຖະບານ 'ໃນການໂອນການບໍລິການພາກລັດສູ່ສະມາຄົມທີ່ນັບມື້ນັບ

ຫຼາຍຂຶ້ນ ດ້ວຍມາດຕະຖານລາຍລະອຽດເພື່ອຊຸກຍູ້ ແລະ ສົ່ງເສີມບັນດາສະມາຄົມໃນການດຳເນີນການບໍລິການພາກລັດ, ການຊ່ວຍເຫຼືອສັງຄົມ ແລະ ການຫຼຸດຜ່ອນຄວາມທຸກຍາກ.' NPAs ຖືກຖືວ່າສາມາດເຮັດວຽກໃນພື້ນທີ່ ແລະ ມີຄວາມຮູ້ຂອງທ້ອງຖິ່ນໃນການສະໜອງການບໍລິການຢ່າງມີປະສິດທິພາບ ແລະ ປະສິດທິຜົນ, ແລະ ໃນແບບທີ່ເປັນການເສີມເຕີມຕໍ່ກັບລັດຖະບານ.

8 ADB. 2010. *ໂຄງການແລວເຊື່ອມຕໍ່ການອະນຸລັກຊີວະນາໆພັນເຂດອະນຸພາກພື້ນແມ່ນ້ຳຂອງ*. ມະນີລາ.

9 ADB. 2005. *ໂຄງການການລິເລີ່ມແລວເຊື່ອມຕໍ່ຊີວະນາໆພັນເຂດອະນຸພາກພື້ນແມ່ນ້ຳຂອງ*. ມະນີລາ.

10 ADB. 2008. *ໂຄງການສົ່ງເສີມພະລັງງານຊີວະພາບທີ່ເປັນມິດກັບສະພາບອາກາດຂອງ GMS*. ມະນີລາ.

11 ADB. 2006. *ໂຄງການພັດທະນາການທ່ອງທ່ຽວແບບຍືນຍົງຂອງ GMS*. ມະນີລາ.

12 ADB. 2010. *ໂຄງການສະໜອງນ້ຳ ແລະ ສຸຂະອະນາໄມເຂດພາກເໜືອ ແລະ ພາກກາງ*. ມະນີລາ.

13 ADB. 2005. *ລະບົບກະເສດປ່າໄມ້ແບບຍືນຍົງ ສຳລັບ ການສົ່ງເສີມຊີວິດການເປັນຢູ່ຂອງປະຊາຊົນຜູ້ທຸກຍາກ*. ມະນີລາ.

14 ADB. 2007. *ເສີມທະວີຄວາມອາດສາມາດຂອງລັດຖະບານທ້ອງຖິ່ນ ແລະ ສະຫະພັນແມ່ຍິງລາວ ສຳລັບ ການຫຼຸດຜ່ອນຄວາມທຸກຍາກແບບຍືນຍົງໃນເຂດພາກເໜືອຂອງປະເທດລາວ*. ມະນີລາ.

## ເອກະສານອ້າງອີງ


ADB. 1999. *ການສຶກສາ ກ່ຽວກັບ NGOs ໃນ ສປປ ລາວ*. ວຽງຈັນ. (ມີໃຫ້ທາງອອນລາຍທີ່ www.adb.org/NGOs/docs/NGOLaoPDR.pdf)

ADB. *ກຳລັງຈະມາເຖິງ. ການເພີ່ມທະວີການມີສ່ວນຮ່ວມ ສຳລັບ ຜົນໄດ້ຮັບດ້ານການພັດທະນາ*. ມະນີລາ.

R. Delnoye. 2010. *ການສຳຫຼວດ ກ່ຽວກັບ ການພັດທະນາຂອງພາກປະຊາສັງຄົມໃນ ສປປ ລາວ: ວິທີປະຕິບັດໃນປະຈຸບັນ ແລະ ຄວາມເປັນໄປໄດ້ ສຳລັບ ການເຕີບໃຫຍ່ຂະຫຍາຍຕົວໃນອະນາຄົດ. ຊຸດເອກະສານການເຮັດວຽກຂອງ SDC ປະຈຳເຂດພາກພື້ນແມ່ນ້ຳຂອງ*. ເລກທີ. 2.

ສູນພັດທະນາການສຶກສາ ແລະ SDC ປະຈຳປະເທດລາວ. 2009. *ຄວາມເປັນໄປໄດ້ຂອງການຕອບສະໜອງ ແລະ ການແຊກແຊງຊ່ວຍເຫຼືອຕ່າງໆເພື່ອ ເສີມສ້າງຄວາມອາດສາມາດຂອງພາກປະຊາສັງຄົມ ໃນ ສປປ ລາວ*. ວຽງຈັນ.

E. King ແລະ D. van der Walle. 2010. ຄວາມຫຼາກຫຼາຍດ້ານພາສາເຜົ່າ ແລະ ຂໍ້ເສຍປຽບ. ພາກ 7 ໃນຫົວຂໍ້ *ປະຊາຊົນດັ້ງເດີມ, ຄວາມທຸກຍາກ ແລະ ການພັດທະນາ*. ເອກະສານປຶກສາຫາລືຂອງທະນາຄານໂລກ. Washington, DC (ມີໃຫ້ທາງອອນລາຍທີ່ http://go.worldbank.org/IILHOIG110)

ອົງການສະຫະປະຊາຊາດເພື່ອການພັດທະນາປະຈຳປະເທດລາວ. 2009. *ບົດລາຍງານຄວາມຄືບໜ້າ ກ່ຽວກັບ MDG*. ວຽງຈັນ. (ມີໃຫ້ທາງອອນລາຍທີ່ www.undplao.org/mdgs/mdgs1.php)


**ສຳລັບ ຂໍ້ມູນເພີ່ມເຕີມ ກ່ຽວກັບ ວຽກງານຂອງ ADB ໃນ ສປປ ລາວ, ໃຫ້ເຂົ້າເບິ່ງເວັບໄຊ www.adb.org/Documents/Fact_Sheets/LAO.pdf**

### ນິຍາມຄວາມໝາຍ ແລະ ຈຸດປະສົງຂອງການຮ່ວມມືກັບພາກປະຊາສັງຄົມ

ພາກປະຊາສັງຄົມແມ່ນຜູ້ມີສ່ວນກ່ຽວຂ້ອງທີ່ສຳຄັນຫຼາຍໃນການດຳເນີນງານຂອງທະນາຄານພັດທະນາອາຊີ (ADB) ແລະ ບັນດາຜູ້ກູ້ຢືມ ແລະ ລູກຄ້າຂອງທະນາຄານ. ມັນແຕກຕ່າງຈາກລັດຖະບານ ແລະ ພາກເອກະຊົນ ແລະ ປະກອບມີ ຫຼາກຫຼາຍບຸກຄົນ, ກຸ່ມຄົນ ແລະ ອົງການບໍ່ຫວັງຜົນກຳໄລ. ພວກເຂົາດຳເນີນງານເພື່ອຜົນປະໂຫຍດ, ຈຸດປະສົງ ແລະ ຄວາມສົນໃຈຮ່ວມກັນ ໂດຍມີພິທີການໃນລະດັບທີ່ແຕກຕ່າງກັນ ແລະ ປະກອບມີຂອບເຂດທີ່ແຕກຕ່າງກັນ ຈາກກຸ່ມຊຸມຊົນທີ່ບໍ່ມີການຈັດຕັ້ງແລະບໍ່ເປັນທາງການໄປຈົນຮອດອົງການຈັດຕັ້ງສະຫະພາບແຮງງານລະດັບສາກົນ. ທີ່ກ່ຽວຂ້ອງໂດຍສະເພາະກັບ ADB ກໍ່ແມ່ນບັນດາອົງການຈັດຕັ້ງບໍ່ສັງກັດລັດ, ອົງການຈັດຕັ້ງຂັ້ນຊຸມຊົນ ແລະ ອົງການຈັດຕັ້ງຂອງປະຊາຊົນ, ມູນນິທິ, ສະມາຄົມວິຊາຊີບ, ສະຖາບັນຄົ້ນຄວ້າວິໄຈ ແລະ ມະຫາວິທະຍາໄລ, ສະມາຄົມແຮງງານ, ອົງການຈັດຕັ້ງມະຫາຊົນ, ຂະບວນການທາງສັງຄົມ, ແລະ ການຮ່ວມມື ແລະ ເຄືອຂ່າຍຂອງບັນດາອົງການຈັດຕັ້ງພາກປະຊາສັງຄົມ (CSOs) ແລະ ອົງການຈັດຕັ້ງແມ່.[a]

ADB ຖືວ່າ CSOs ເປັນຜູ້ປະດຳເນີນງານທີ່ສຳຄັນໃນດ້ານການພັດທະນາຕາມສິດທິຂອງເຂົາເຈົ້າຊຶ່ງຄວາມພະຍາຍາມຂອງເຂົາເຈົ້າເປັນການເສີມເຕີມໃຫ້ແກ່ຄວາມພະຍາຍາມຂອງລັດຖະບານ ແລະ ພາກເອກະຊົນ, ແລະ ຜູ້ທີ່ມີບົດບາດສຳຄັນໃນການພັດທະນາໃນເຂດອາຊີ ແລະ ປາຊີຟິກ. ADB ມີທຳນຽມປະຕິບັດມາຍາວນານໃນການຮ່ວມງານກັບ CSOs ໃນສະພາບການຕ່າງໆ, ຜ່ານການປຶກສາຫາລືໃນລະດັບນະໂຍບາຍ ແລະ ຍຸດທະສາດລະດັບປະເທດ, ແລະ ໃນການອອກແບບ, ການຈັດຕັ້ງປະຕິບັດ ແລະ ການຕິດຕາມກວດກາໂຄງການ.

ໃນປີ 2008, ADB ເລີ່ມນຳໃຊ້ຍຸດທະສາດປີ 2020, ເຊິ່ງອະທິບາຍແຈ້ງທິດທາງໃນອະນາຄົດ ແລະ ວິໄສທັດຂອງອົງການແຕ່ນີ້ຮອດປີ 2020.[b] ກ່ອນອື່ນໝົດ, ຍຸດທະສາດປີ 2020 ສະເໜີສາມວາລະຍຸດທະສາດທີ່ເພີ່ມເຕີມກັນ ແລະ ກັນເພື່ອເປັນສິ່ງຊີ້ນຳການດຳເນີນງານຂອງ ADB: ການເຕີບໂຕດ້ານເສດຖະກິດຮອບດ້ານ, ການເຕີບໂຕທີ່ມີຄວາມຍືນຍົງດ້ານສິ່ງແວດລ້ອມ, ແລະ ການລວມຕົວເຂົ້າໃນພາກພື້ນ. ວາລະເຫຼົ່ານີ້ສະທ້ອນໃຫ້ເຫັນເຖິງການຮັບຮູ້ວ່າ ມັນບໍ່ພຽງແຕ່ແມ່ນອັດຕາການເຕີບໂຕເທົ່ານັ້ນ ແຕ່ຍັງແມ່ນຮູບແບບຂອງການເຕີບໂຕນຳອີກ ທີ່ມີຄວາມສຳຄັນໃນການຫຼຸດຜ່ອນຄວາມທຸກຍາກໃນເຂດພາກພື້ນ. ໃນຂອບກຳໜົດຍຸດທະສາດໃໝ່ນີ້, ການເປັນຄູ່ຮ່ວມງານກັບຫຼາກຫຼາຍອົງການຈັດຕັ້ງ, ລວມທັງ CSOs, ຈະກາຍເປັນໃຈກາງໃນການວາງແຜນ, ການໃຫ້ທຶນ, ການຈັດຕັ້ງປະຕິບັດ, ແລະ ການປະເມີນຜົນບັນດາໂຄງການຂອງ ADB.

---

a ADB. ໃກ້ຈະມາເຖິງ. ການເພີ່ມທະວີການມີສ່ວນຮ່ວມເພື່ອ ຜົນໄດ້ຮັບດ້ານການພັດທະນາ. ມະນີລາ.

b ADB. 2008. ຍຸດທະສາດປີ 2020: ກອບຍຸດທະສາດໄລຍະຍາວຂອງທະນາຄານພັດທະນາອາຊີ, 2008–2020. ມະນີລາ.


ຫ້ອງການຜູ້ຕາງໜ້າປະຈຳປະເທດລາວ
ແຈຖະໜົນລ້ານຊ້າງ ແລະ ຖະໜົນສາມແສນໄທ
ຕູ້ ປນ 9724, ວຽງຈັນ, ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ໂທ +856 21 250444
ແຟັກ +856 21 250333
adblrm@adb.org
www.adb.org/LRM


ໃນເອກະສານນີ້, "$" ໝາຍເຖິງໂດລາສະຫະລັດ.


ເອກະສານພິມເຜີຍແຜ່ເລກທີ ARM114064 ກັນຍາ 2011